# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-22 ມິຖຸນາ 2024
ປີທີ 13
ສະບັບທີ 974
ລາຍສັປະດາ


## ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໄຂຂຶ້ນຢ່າງເປັນທາງການ






(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 10 ມິຖຸນາ 2024 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ; ບັນດາທ່ານການນຳຂັ້ນສູງແລະອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດແລະແຂກຖືກເຊີນ.

ພາຍຫຼັງທ່ານ ປອ. ໄຊສົມພອນ ພົມວິຫານ ກ່າວສູນທອນພິດເປີດກອງປະຊຸມຢ່າງເປັນທາງການ. ກອງປະຊຸມໄດ້ຮັບຟັງບົດລາຍງານໂດຍສັງເຂບຂອງນາຍົກລັດຖະມົນຕີກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດໄລຍະ 6 ເດືອນຕົ້ນປີ ແລະ ແຜນ

ອ່ານຕໍ່ໜ້າ 10

## ສູນທອນພິດ
### ຂອງປະທານສະພາແຫ່ງຊາດ ກ່າວໄຂກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX

(ສພຊ) - ໃນພິທີເປີດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພິດໄຂກອງປະຊຸມວ່າ: ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ກອງປະຊຸມຄົບຄະນະຄັ້ງທີ 8 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ XI, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນ

ອ່ານຕໍ່ໜ້າ 4

## ກອງປະຊຸມຄັ້ງທີ 1 ຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນປີ 2015



(ສພຊ) - ຕອນບ່າຍວັນສຸກທີ 07 ມິຖຸນາ 2024 ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຄັ້ງທີ 1 ຂອງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ; ເຂົ້າຮ່ວມມີທ່ານຮອງປະທານ ແລະ ບັນດາທ່ານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ປີ 2015 ຢ່າງຄົບຄະນະ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ກໍເພື່ອຈັດຕັ້ງປະຕິບັດມະຕິກົມການເມືອງສູນກາງພັກ ສະບັບເລກທີ 15/ກມສພ, ລົງວັນທີ 22 ພຶດສະພາ 2024 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໃຫ້ທັນເວລາ ແລະ ມີປະສິດທິຜົນ ທັງເປັນການປຶກສາຫາລື ແລະ ຕົກລົງວຽກງານສຳຄັນຮີບດ່ວນຈຳນວນໜຶ່ງກ່ຽວກັບການປັບປຸງລັດຖະທຳມະນູນ.

ຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ, ກົງໄປກົງມາ ໃສ່ຮ່າງແຜນການເຄື່ອນໄຫວວຽກງານຂອງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ, ຮ່າງແຜນ

ອ່ານຕໍ່ໜ້າ 6

## ເຝິກອົບຮົມໃຫ້ແກ່ພະນັກງານກະກຽມຮັບໃຊ້ ກອງປະຊຸມ AIPA ຄັ້ງທີ 45




(ສພຊ) - ກອງປະຊຸມເຝິກອົບຮົມວຽກງານບໍລິຫານ ແລະ ພິທີການ ໃຫ້ແກ່ພະນັກງານທີ່ຈະຮັບໃຊ້ໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໄດ້ຈັດຂຶ້ນທີ່ທ່າລາດເມືອງແກ້ວອຸດົມ ແຂວງວຽງຈັນ ໃນວັນທີ 06-09 ມິຖຸນາ 2024 ພາຍໃຕ້ການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານການຕ່າງປະເທດ; ມີທ່ານ ນາງ ວັນດີ ບຸດທະສະວົງ ຮອງປະທານກຳມາທິການການຕ່າງປະເທດ, ບັນດາທ່ານວິທະຍາກອນ, ຄະນະກົມ, ຄະນະພະແນກ ແລະ ພະນັກງານ

ອ່ານຕໍ່ໜ້າ 4

## ແລກປ່ຽນບົດຮຽນການຄົ້ນຄວ້າພິຈາລະນາຄຳຮ້ອງຂໍຄວາມເປັນທຳ




(ສພຊ) - ກອງປະຊຸມສຳມະນາກ່ຽວກັບຂັ້ນຕອນການຄົ້ນຄວ້າ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳທີ່ມີຄວາມຫຍຸ້ງຍາກແລະພົວພັນກັບຫຼາຍພາກສ່ວນ ໄດ້ຈັດຂຶ້ນໃນວັນທີ 06-07 ມິຖຸນາ 2024 ທີ່ເມືອງແກ້ວອຸດົມແຂວງວຽງຈັນໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານປະທານ, ຮອງປະທານກຳມາທິການຍຸຕິທຳ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານສານປະຊາຊົນສູງສຸດ, ບັນດາຜູ້ຕາງໜ້າຂອງກະຊວງຊັບພະຍາ

ອ່ານຕໍ່ໜ້າ 3

**ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຢ່າງສຸດໃຈ!**

# ສຳເລັດກອງປະຊຸມໃຫຍ່ໜ່ວຍຊາວໜຸ່ມຮາກຖານກຳມາທິການວັດທະນະທຳ-ສັງຄົມ



(ສພຊ) - ກອງປະຊຸມໃຫຍ່ສະມາຊິກຊາວໜຸ່ມໜ່ວຍຊາວໜຸ່ມຮາກຖານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ໄດ້ໄຂຂຶ້ນໃນຕອນບ່າຍຂອງວັນພຸດທີ 05 ມິຖຸນາ 2024 ພາຍໃຕ້ການເປັນປະທານຮ່ວມຂອງ ສະຫາຍ ນາງ ທຸມມາລີ ວົງພະຈັນ ຄະນະບໍລິຫານງານພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານກຳມາທິການວັດທະນະທຳ-ສັງ ຄົມ, ສະຫາຍ ເປຄຳ ລໍຄຳສອນ ຮອງເລຂາ ທັງເປັນປະທານກວດກາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ນາງ ສຸວັນໄຊ ເກິ່ງດາລາເລຂາໜ່ວຍຊາວໜຸ່ມຮາກຖານ ກວທສ; ມີຜູ້ແທນສົມບູນ ແລະແຂກຖືກເຊີນ ເຂົ້າຮ່ວມຫຼາຍກວ່າ 20 ສະຫາຍ.

ກອງປະຊຸມໄດ້ເປັນເອກະສັນຮັບຮອງເອົາລາຍງານການເມືອງ ແລະ ສະແດງຄວາມເຫັນດີເຫັນພ້ອມຕໍ່ບົດສະຫຼຸບຕີລາຄາຜົນງານຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການວັດທະນະທຳ-ສັງຄົມ ທີ່ຍາດມາໄດ້ໃນໄລຍະຜ່ານມາ ເຊິ່ງແມ່ນຜົນງານໃນການນຳພາ-ຊີ້ນຳຂອງຄະນະໜ່ວຍຊາວໜຸ່ມຮາກຖານ ຕໍ່ຂົງເຂດວຽກງານຕ່າງໆຕາມຄວາມຮັບຜິດຊອບ; ພ້ອມກັນນີ້, ກໍເປັນເອກະພາບຕາມທິດທາງລວມ, ຄາດໝາຍສູ້ຊົນ ແລະ ທິດທາງວຽກງານລະອຽດແຕ່ລະດ້ານ ໃນ 5 ປີຕໍ່ໜ້າ. ຮັບຟັງການລາຍງານແລະຮັບຮອງເອົາບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານ ກວທສ ໃນໄລຍະຜ່ານມາ ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ຈະໄດ້ປັບປຸງແກ້ໄຂຂໍ້ບົກຜ່ອງ ແລະ ເສີມຂະຫຍາຍດ້ານຕັ້ງໜ້າຢ່າງແຂງແຮງ.

ຜູ້ແທນສົມບູນ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກເອົາຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການວັດທະນະທຳ-ສັງຄົມ ຊຸດໃໝ່ ບົນພື້ນຖານຕາມຫຼັກການລວມສູນປະຊາທິປະໄຕ, ຖືກຕ້ອງຕາມມາດຕະຖານເງື່ອນໄຂທີ່ໄດ້ກຳນົດໄວ້ ເຊິ່ງມີຜູ້ສະໝັກທັງໝົດ 7 ສະຫາຍ ຍິງ 2 ສະຫາຍ, ເລືອກເອົາ 5 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ໄດ້ເປັນເອກະພາບເລືອກເອົາສະຫາຍ ນິມິດໄຊ ເທບພະວັນ ເປັນເລຂາ, ສະຫາຍ ປິ່ນແກ້ວ ຄູນສະຫວັດ ເປັນຮອງເລຂາ ແລະ ປະທານກວດກາ, ສະຫາຍ ອຳພອນ ສອນມີໄຊ ເປັນຮອງເລຂາ, ສະຫາຍ ນາງ ປານທອງ ອຸ່ນເຄືອ ແລະ ສະຫາຍ ນິກອນ ວອນມະນີຈັນ ເປັນກຳມະການ.

ໃນໂອກາດນີ້, ສະຫາຍ ນາງ ທຸມມາລີ ວົງພະຈັນ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານທີ່ໜ່ວຍຊາວໜຸ່ມຮາກຖານກຳມາທິການວັດທະນະທຳ-ສັງຄົມ ຍາດມາໄດ້ໃນໄລຍະຜ່ານມາ. ພ້ອມນັ້ນ, ກໍໄດ້ເນັ້ນໜັກໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ເພີ່ມທະວີເອົາໃຈໃສ່ຊີ້ນຳ-ນຳພາຈັດຕັ້ງປະຕິບັດວຽກງານໃຫ້ໄປຕາມທິດທາງແຜນການທີ່ກຳນົດໄວ້; ຕັ້ງໜ້າສຶກສາອົບຮົມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ໃຫ້ສະມາຊິກຂອງຕົນມີຄວາມໝັກແໜ້ນທາງດ້ານການເມືອງແນວຄິດ, ມີສະຕິ, ມີນ້ຳໃຈຮັກຊາດ, ຮັກລະບອບໃໝ່, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ຮັກອາຊີບ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາແລະພັດທະນາປະເທດຊາດ; ເອົາໃຈໃສ່ຄົ້ນຄວ້າ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມໃຫຍ່ຂອງຜູ້ແທນຊາວໜຸ່ມທົ່ວປະເທດ, ມະຕິຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແຕ່ລະໄລຍະ, ກົດໝາຍວ່າດ້ວຍຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ກົດລະບຽບຂອງຊາວໜຸ່ມ; ເຜີຍແຜ່ເນື້ອໃນຈິດໃຈຂໍ້ແຂ່ງຂັນຂອງຊາວໜຸ່ມສະພາແຫ່ງຊາດ ໃຫ້ແກ່ສະມາຊິກພາຍໃນໜ່ວຍຢ່າງປົກກະຕິ; ເອົາໃຈໃສ່ປະຕິບັດລະບອບສອງແສງລາຍງານ, ມີການຕຳນິຕົນເອງ, ຕຳນິສິ່ງຂ່າວເພື່ອກໍ່ສ້າງເຊິ່ງກັນແລະກັນຢ່າງສ້າງສັນ, ມີການດຳເນີນຊີວິດທີ່ຕິດພັນກັບວຽກວິຊາສະເພາະຂອງແຕ່ລະສະຫາຍເປັນປົກກະຕິ. ຕັ້ງໜ້າສຸມໃສ່ປະຕິບັດຂໍ້ແຂ່ງຂັນຂອງໜ່ວຍພັກກ່ຽວກັບການສ້າງໜ່ວຍພັກປອດໃສ ເຂັ້ມແຂງ ໜັກແໜ້ນ ໄປຄຽງຄູ່ກັບການສ້າງຂະບວນການປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມຢ່າງຫ້າວຫັນ ໂດຍສະເພາະດ້ານແນວຄິດ, ດ້ານການເຝິກຝົນຫຼໍ່ຫຼອມ-ຮໍ່າຮຽນ, ດ້ານການຈັດຕັ້ງ ແລະ ດ້ານວິຊາຊີບ ໃຫ້ປາກົດຜົນເປັນຮູບປະທຳ. ບັນດາສະມາຊິກຊາວໜຸ່ມຕ້ອງເປັນເຈົ້າການ ແລະ ເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດກົດໝາຍ, ຕັ້ງໜ້າຍົກລະດັບຄວາມຮູ້, ຄວາມສາມາດ ປະກອບສ່ວນເຂົ້າໃນວຽກງານຊາວໜຸ່ມ ແລະ ວຽກງານວິຊາສະເພາະ ດ້ວຍຄວາມຫ້າວຫັນ ດັ່ງຄຳຂວັນທີ່ວ່າ: ຊາວໜຸ່ມຈຶ່ງເປັນດັ່ງອິນຊີ ທີ່ບໍ່ຫວັນກົວຕໍ່ພາຍຸລົມແດງ ຈຶ່ງກາຍເປັນສິນໄຊຂອງຍຸກສະໄໝພວກເຮົາ, ບ່ອນໃດຍາກຊາວໜຸ່ມບຸກ ບ່ອນໃດທຸກຊາວໜຸ່ມຜ່ານຜ່າ ເມື່ອໃດຊາດຕ້ອງການ ຊາວໜຸ່ມຂານອາສາ.

**(ອານຸສອນ ພູມມີທອນ)**

# ມອບ-ຮັບເຄື່ອງຊ່ວຍເຫຼືອຈາກສູນລວມຄຣິສຕະຈັກຂ່າວປະເສີດ

(ສພຊ) - ໃນຕອນບ່າຍວັນທີ 07 ມິຖຸນາ 2024 ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫຼືອຈາກສູນລວມຄຣິສຕະຈັກຂ່າວປະເສີດ ສປປລາວ ໃຫ້ແກ່ກຳມາທິການບັນດາເຜົ່າ ປະກອບມີ: ຄອມພິວເຕີຕັ້ງໂຕະ 09 ຊຸດ, ປຣິນເຕີ 02 ຊຸດ ແລະ ເຄື່ອງສະແກນເອກະສານ 01 ຊຸດ ລວມມູນຄ່າທັງໝົດ 63.7 ລ້ານກີບ ເຊິ່ງກ່າວມອບໂດຍທ່ານ ສຈ. ຄຳແພງ ມິດປະຊາ ຮອງປະທານສູນລວມຄຣິສຕະຈັກຂ່າວປະເສີດ ສປປ ລາວ ແລະ ກ່າວຮັບໂດຍທ່ານ ຄຳຈັນ ໂສຕາປະເສີດ




ປະທານກຳມາທິການບັນດາເຜົ່າ, ມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດດັ່ງກ່າວ, ທ່ານ ຄຳຈັນ ໂສຕາປະເສີດ ກໍໄດ້ກ່າວສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ໃຫ້ແກ່ຄະນະກຳມະການສູນລວມຄຣິສຕະຈັກຂ່າວປະເສີດ ສປປ ລາວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນຄັ້ງນີ້.

**(ນາງ ກຸກກີກ ບຸດດາໄຊ)**




*# ຄັດໂດຍ: ທອມສະນິດ*

*❐ ໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງນະຄອນຫຼວງວຽງຈັນ ໄດ້ເລີ່ມຈັດຕັ້ງປະຕິບັດໃນວັນທີ 1 ມິຖຸນາ2024ແລະຈະໃຫ້ສຳເລັດໃນເດືອນມີນາ2025 ໂດຍພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເປັນເຈົ້າຂອງໂຄງການແຫຼ່ງທຶນ ໄດ້ຈາກທະນາຄານພັດທະນາອາຊີ(ADB)ສຳລັບສັນຍາVSUTP-ICB-CW1B-2002 ກໍ່ສ້າງເສັ້ນທາງລົດເມດ່ວນ ແລະ ສະຖານີ BRT ເລີ່ມຕົ້ນແຕ່ປະຕູໄຊ ຫາມະຫາວິທະຍາໄລແຫ່ງຊາດ ໂດຍບໍລິສັດລັດວິສາຫະກິດກໍ່ສ້າງທາງເລກ 8 ແລະ ບໍລິສັດຮ່ວມທຶນ TSC&LBD (ສສ.ຫວຽດນາມ) ເປັນຜູ້ຮັບເໝົາກໍ່ສ້າງ ໄລຍະທາງຍາວ 9,3 ກິໂລແມັດ ມູນຄ່າ 9,8 ລ້ານໂດລາ.*

**ໜສພ. ວຽງຈັນໃໝ່ 04/06/2024**

*❐ ໃນທ້າຍປີ 2023 ອົງການເພື່ອການສຶກສາວິທະຍາສາດ ແລະ ວັດທະນະທຳ ຂອງສະຫະປະຊາຊົນ ຫຼື ອຸຍແນັສໂກ (UNESCO) ໄດ້ຮັບຮອງເອົາລາຍນາກ ພູມປັນຍາ ຂອງຊາວຊ່າງຫັດຖະກຳ ທີ່ຕິດພັນກັບຄວາມເຊື່ອໃນການດຳລົງຊີວິດຂອງປະຊາຊົນລາວ ເປັນມໍລະດົກໂລກທາງວັດທະນະທຳ ທີ່ບໍ່ເປັນວັດຖຸ ທີ່ເປັນຕົວແທນຂອງມວນມະນຸດຢ່າງເປັນທາງການ ນັ້ນໄດ້ສ້າງຄວາມພາກພູມໃຈໃຫ້ແກ່ປະຊາຊົນລາວ ເພາະລາຍນາກເປັນລາຍທີ່ໂດດເດັ່ນອັນດັບໜຶ່ງໃນຜ້າແພລາວ ທີ່ຖືກປະດິດຄິດສ້າງຂຶ້ນດ້ວຍຈິດສຳນຶກ ແລະ ສິລະປະອັນປານີດຂອງຄົນລາວ ເຊິ່ງໄດ້ຕິດພັນກັບການດຳລົງຊີວິດຂອງຄົນລາວມາແຕ່ສະໄໝບູຮານ. ສຳລັບພິທີສະຫຼອງ ແລະ ປະກາດລາຍນາກເປັນມໍລະດົກໂລກນັ້ນທາງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈະໄດ້ຈັດຂຶ້ນໃນໄວໆນີ້.*

**ໜສພ. ປະທດລາວ 05/06/2024**

*❐ ສົກຮຽນ 2023-2024 ທົ່ວປະເທດ ມີນັກຮຽນຜູ້ມີສິດສອບເສັງຈົບຊັ້ນມັດທະຍົມຕອນຕົ້ນ(ມ4) ແລະຊັ້ນມັດທະຍົມຕອນປາຍ(ມ7)ທັງໝົດ115.594 ຄົນ ເຊິ່ງຈະສອບເສັງໃນກາງເດືອນມິຖຸນາ 2024 ນີ້ ໂດຍມີ 8 ແຂວງຈະນຳໃຊ້ເຄື່ອງຈັກກວດບົດສອບເສັງຈົບ ໃນຂັ້ນ ມ7 ເປັນຄັ້ງທຳອິດ ເຊິ່ງໃນສົກຮຽນ 2023-2024 ທົ່ວປະເທດ ມີ ໂຮງຮຽນມັດທະຍົມທັງໝົດ 1.852 ແຫ່ງ, ເອກະຊົນ 140 ແຫ່ງ. ໃນນີ້, ໂຮງຮຽນມັດທະຍົມ ຕອນຕົ້ນ 978 ແຫ່ງ, ໂຮງຮຽນມັດທະຍົມຕອນປາຍ 32 ແຫ່ງ ແລະ ໂຮງຮຽນມັດທະຍົມສົມບູນ 842 ແຫ່ງ.*

**ໜສພ. ປະຊາຊົນ 05/06/2024**

# USAID ແລະ UNDP ສະໜັບສະໜູນການຫັນເປັນທັນສະໄໝໃຫ້ແກ່ ສພຂ



(ສພຊ) - ອົງການພັດທະນາສາກົນຂອງສະຫະລັດອາເມລິກາ (USAID) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ປະຈຳ ສປປ ລາວ ໄດ້ມອບອຸປະກອນໄອຊີທີ ແລະ ພາຫະນະ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ (ສພຂ) ທົ່ວປະເທດ ລວມມູນຄ່າ 702,696 ໂດລາສະຫະລັດ ໂດຍຜ່ານການຮ່ວມມືໃນໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs); ພິທີມອບ-ຮັບໄດ້ຈັດຂຶ້ນໃນວັນສຸກທີ 07 ມິຖຸນາ 2024 ທີ່ສະພາແຫ່ງຊາດ (ສພຊ), ຕາງໜ້າມອບໂດຍທ່ານ ໄມໂຄຣ ຊິບເຟີ ຮອງຜູ້ອຳນວຍການຝ່າຍບໍລິຫານອົງການພັດທະນາສາກົນປະເທດສະຫະລັດອາເມລິກາ ປະຈຳພາກພື້ນອາຊີ ແລະຕາງໜ້າຮັບໂດຍທ່ານປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີການນຳຂັ້ນສູງຈາກ ສພຊ ແລະ ສພຂ, ເຈົ້າໜ້າທີ່ກ່ຽວຂ້ອງຈາກສະຫະລັດອາເມລິກາ, ຜູ້ຕາງໜ້າ UNDP ແລະ ພະນັກງານໂຄງການສະເຕັບສ໌ ເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ໄມໂຄຣ ຊິບເຟີ ໄດ້ກ່າວວ່າ: ມື້ນີ້ຖືເປັນຂີດໝາຍສຳຄັນໃນການຮ່ວມມືຂອງອົງການພັດທະນາສາກົນປະເທດສະຫະລັດອາເມລິກາແລະສປປ ລາວ ເຊິ່ງໄດ້ມີການມອບ-ຮັບເຄື່ອງຊ່ວຍເຫຼືອທີ່ຈຳເປັນເພື່ອສະໜັບສະໜູນວຽກງານການປົກຄອງ ແລະການບໍລິຫານລັດທີ່ມີປະສິດທິພາບ ແລະ ປະສິດທິຜົນ, ອົງການພັດທະນາສາກົນປະເທດສະຫະລັດອາເມລິກາຍຶດໝັ້ນໃນຄຳໝັ້ນສັນຍາຂອງຕົນທີ່ຈະສົ່ງເສີມສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງທົ່ວປະເທດ ດ້ວຍເຄື່ອງມືທີ່ຈຳເປັນເພື່ອປະຕິບັດໜ້າທີ່ອັນສຳຄັນຂອງຕົນ ໂດຍຜ່ານການປະຕິບັດໜ້າທີ່ການເປັນຜູ້ແທນໄດ້ຢ່າງມີປະສິດທິພາບ.

ທ່ານ ນາງ ມາຕິນ ແທເຣີ ຜູ້ຕາງໜ້າ UNDP ປະຈຳ ສປປ ລາວ ໄດ້ກ່າວວ່າ: ອົງການສະຫະປະຊາຊາດເພື່ອການພັດທະນາ ມີຄວາມຍິນດີສະໜັບສະໜູນການຫັນເປັນທັນສະໄໝຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງທົ່ວປະເທດ ຜ່ານໂຄງການສະເຕັບສ໌, ການມອບອຸປະກອນທັນສະໄໝ ແລະ ພາຫະນະໃນຄັ້ງນີ້ ແມ່ນການສະໜັບສະໜູນຂອງອົງການພັດທະນາສາກົນຂອງສະຫະລັດອາເມລິກາ ເຊິ່ງປະກອບສ່ວນເຂົ້າໃນການຍົກສູງປະສິດທິພາບ ແລະປະສິດທິຜົນວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການເປັນກະບອກສຽງແລະຕອບສະໜອງຕາມຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າ.

ເຄື່ອງອຸປະກອນດິຈິຕອນທີ່ທັນສະໄໝ ແມ່ນມີຄວາມສຳຄັນຫຼາຍໃນຂະບວນການເຜີຍແຜ່ວຽກງານຂອງສະພາປະຊາຊົນຂັ້ນແຂວງ ເຮັດໃຫ້ປະຊາຊົນມີສ່ວນຮ່ວມຫຼາຍຂຶ້ນ ທັງເປັນການເພີ່ມຄວາມໂປ່ງໃສຂອງຂໍ້ມູນ-ຂ່າວສານ ກ່ຽວກັບ ສພຂ ນຳອີກ, ການສະໜັບສະໜູນຢ່າງຕໍ່ເນື່ອງຂອງໂຄງການສະເຕັບສ໌ ຈະເຮັດໃຫ້ມີຄວາມຍືນຍົງ ແລະ ຜົນໄດ້ຮັບທີ່ດີໃນໄລຍະຍາວອີກດ້ວຍ.

ການມອບ-ຮັບເຄື່ອງຊ່ວຍເຫຼືອໃນຄັ້ງນີ້ ໄດ້ເປັນເປັນບາດກ້າວໃໝ່ຂອງການຫັນເປັນລະບົບດິຈິຕອນຂອງອົງການນິຕິບັນຍັດ ຂອງ ສປປ ລາວ ແລະ ຍັງເປັນສັນຍານຊີ້ບອກຂອງການຮ່ວມມືກັນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກັບ ອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ປະເທດສະຫະລັດອາເມລິກາ.



## ແລກປ່ຽນ...

(ຕໍ່ຈາກໜ້າ 1)

ກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຍຸຕິທຳ, ອົງການກວດກາແຫ່ງລັດ, ບັນດາທ່ານປະທານ ແລະ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ, ບັນດາທ່ານຫົວໜ້າ ແລະ ຮອງຫົວໜ້າກົມ ຈາກສະພາແຫ່ງຊາດ, ກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງຫຼວງຫຼາຍ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອແລກປ່ຽນບົດຮຽນລະຫວ່າງສະພາແຫ່ງຊາດກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນທີ່ມີຄວາມຫຍຸ້ງຍາກແລະພົວພັນກັບຫຼາຍພາກສ່ວນ ເຊິ່ງເປັນການແລກປ່ຽນບົດຮຽນທັງດ້ານຜົນສຳເລັດ ແລະ ສິ່ງທ້າທາຍ, ຂໍ້ຫຍຸ້ງຍາກໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ລວມທັງຂັ້ນຕອນການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ໃຫ້ມີປະສິດທິພາບ ແລະ ມີຄຸນນະພາບດີຂຶ້ນກວ່າເກົ່າ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ກ່າວເປີດກອງປະຊຸມໂດຍເນັ້ນໜັກວ່າ: ກອງປະຊຸມ ມີຄວາມສຳຄັນຫຼາຍ ເພາະຈະໄດ້ຮັບຟັງການປະຕິບັດໜ້າທີ່ວຽກງານໃນການດຳເນີນຄະດີຕາມຂະບວນຍຸຕິທຳຂອງແຕ່ລະອົງການ ແລະ ພາກສ່ວນທີ່ຮັບຜິດຊອບຕາມກົດໝາຍໄດ້ກຳນົດໄວ້; ພ້ອມກັນນັ້ນ ກໍຈະໄດ້ຄົ້ນຄວ້າ, ແລກປ່ຽນຄຳເຫັນ ແລະ ສ້າງໃຫ້ມີຄວາມຮັບຮູ້ເຂົ້າໃຈເລິກເຊິ່ງ, ມີຄວາມເປັນເອກະພາບຕໍ່ຮູບການ, ວິທີການ ແລະ ຂັ້ນຕອນຂອງການດຳເນີນຄະດີຕາມຂະບວນຍຸຕິທຳ ເຊິ່ງປະ ກອບມີເນື້ອໃນລາຍງານສະພາບຄຳຮ້ອງຂໍຄວາມເປັນທຳທີ່ມີຄວາມຫຍຸ້ງຍາກ, ສັບສົນແລະປຶກສາຊອກຫາວິທີທາງອອກເພື່ອເຮັດໃຫ້ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນເປັນທີ່ສິ້ນສຸດ. ກອງປະຊຸມຄັ້ງນີ້ ມີຫຼາຍເນື້ອໃນທີ່ຈະນຳມາປຶກສາຫາລືເພື່ອຍົກສູງປະສິດທິພາບໃນການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍແລະສ້າງໃຫ້ມີຄວາມເປັນເອກະພາບໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ເພື່ອເຮັດໃຫ້ການດຳເນີນຄະດີໄປໃນທິດທາງດຽວກັນ ບົນພື້ນຖານລັດຖະທຳມະນູນ, ລະບຽບກົດໝາຍຂອງລັດ ແນໃສ່ຮັບປະກັນໃຫ້ການດຳເນີນຄະດີມີຄວາມຖືກຕ້ອງ, ໂປ່ງໃສ, ວ່ອງໄວ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ.

ໃນກອງປະຊຸມໄດ້ຮັບຟັງສະພາບລວມກ່ຽວກັບຄຳຮ້ອງທີ່ມີຄວາມຫຍຸ້ງຍາກ, ສັບສົນ ແລະພົວພັນກັບຫຼາຍພາກສ່ວນໃນໄລຍະຜ່ານມາ; ການປະກອບຄຳເຫັນຈາກຕາງໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ອົງການກວດກາແຫ່ງລັດ, ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ.

ນອກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມທີ່ມາຈາກພາກສ່ວນຕ່າງໆ ໄດ້ພ້ອມກັນເອົາໃຈໃສ່ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ ໃນການຄົ້ນຄວ້າ ແລະແລກປ່ຽນຄວາມຄິດເຫັນຢ່າງກົງໄປກົງມາ, ດ້ວຍເຫດດ້ວຍຜົນ ໂດຍສະເພາະແມ່ນບັນຫາທີ່ຍັງບໍ່ທັນເປັນເອກະພາບ ແລະ ຈະແຈ້ງ ຫຼືສາເຫດທີ່ພາໃຫ້ການດຳເນີນຄະດີຕາມຂະບວນຍຸຕິທຳ ບໍ່ທັນຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ກໍໄດ້ຍົກຂຶ້ນມາແລກປ່ຽນນຳກັນ ພ້ອມທັງຊອກຫາວິທີການແລະມາດຕະການແກ້ໄຂ.

**(ກົງທະນູຄຳ ພິພັດເສລີ)**

# ແລກປ່ຽນ, ຮຽນຮູ້ວຽກງານລັດຖະສະພາທີ່ນຳໃຊ້ລະບົບເຕັກໂນໂລຊີທັນສະໄໝ ແລະ ນະວັດຕະກຳອັດສະລິຍະ



(ສພຊ) - ໃນລະຫວ່າງວັນທີ 04-07 ມິຖຸນາ 2024 ຄະນະຜູ້ແທນວິຊາການອາວຸໂສຂອງສະພາແຫ່ງຊາດແຫ່ງສປປ ລາວ ນຳໂດຍທ່ານ ເພັດລາ ທັນທະວົງສາ ຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ, ກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມການເຄື່ອນໄຫວຢ້ຽມຢາມ ແລະ ທັດສະນະສຶກສາ ຢູ່ລັດຖະສະພາແຫ່ງສາທາລະນະລັດຝຣັ່ງ ໂດຍການຮ່ວມມືລະຫວ່າງລັດຖະສະພາຝຣັ່ງ ແລະ ສູນລັດຖະສະພາອາຊີ (PCASIA) ຮ່ວມກັນຈັດຂຶ້ນ ເຊິ່ງມີການເຂົ້າຮ່ວມຈາກສະພາແຫ່ງຊາດຂອງສປປ ລາວ ແລະ ລາຊະອານາຈັກກຳປູເຈຍ.

ໃນການເຂົ້າຮ່ວມຄັ້ງນີ້, ຄະນະຜູ້ແທນໄດ້ຮ່ວມກັນແລກປ່ຽນຂໍ້ມູນຂ່າວສານ ແລະຮຽນຮູ້ກ່ຽວກັບວຽກງານລັດຖະສະພາ ທີ່ນຳໃຊ້ລະບົບເຕັກໂນໂລຊີທັນສະໄໝ ແລະນະວັດຕະກຳອັດສະລິຍະ ໃນການປະຕິບັດພາລະບົດບາດດ້ານນິຕິບັນຍັດ, ການສ້າງແລະປັບປຸງກົດໝາຍ, ການພິຈາລະນາ ແລະ ຮັບຮອງກົດໝາຍຢູ່ໃນກອງປະຊຸມ, ການຮ່າງບົດບັນທຶກລາຍງານຜົນຂອງກອງປະຊຸມ, ການຕັ້ງຄຳຊັກຖາມຕໍ່ລັດຖະບານຢູ່ກອງປະຊຸມ, ການຮັບ ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ການພົວພັນປະສານງານລະຫວ່າງລັດຖະສະພາກັບອົງການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ, ການຄຸ້ມຄອງ-ບໍລິຫານ ແລະ ການສະໜອງຂໍ້ມູນຂ່າວສານທີ່ນຳໃຊ້ລະບົບຖານຂໍ້ມູນລັດຖະສະພາແບບເປີດ (Open Parliament), ວຽກງານສື່ມວນຊົນທີ່ນຳໃຊ້ຊ່ອງທາງການສື່ສານແບບມວນຊົນ, ວຽກງານຄຸ້ມຄອງ-ພັດທະນາບຸຄະລາກອນ, ວຽກງານພະລາທິການ, ບໍລິຫານ-ການຄຸ້ມຄອງ, ການເງິນ-ງົບປະມານ ແລະ ອື່ນໆ; ພ້ອມກັນນີ້, ຄະ ນະຜູ້ແທນຍັງໄດ້ເຂົ້າສັງເກດການ ແລະ ທັດສະນະເບິ່ງຕົວຈິງການດຳເນີນກອງປະຊຸມລັດຖະສະພາ, ການເຮັດບົດບັນທຶກລາຍງານກອງປະຊຸມ, ການເກັບຮັກສາ-ວາງສະແດງຊັບສົມບັດອັນລ້ຳຄ່າ, ບັນດາຕຶກອາຄານທີ່ເຕັມໄປດ້ວຍສະຖາປັດຕະຍະກຳອັນເກົ່າແກ່ແລະສວຍງາມ, ຫ້ອງສະໝຸດ, ຫໍມູນເຊື້ອ, ຫ້ອງຖ່າຍທຳລາຍການໂທລະພາບຂອງລັດຖະສະພາ, ບັນດາຖານຂໍ້ມູນທາງອອນລາຍ ລວມທັງການນຳໃຊ້ແອັບປລິເຄຊັນ ແລະ ອື່ນໆ.

ໃນໂອກາດເຂົ້າຮ່ວມການເຄື່ອນໄຫວຢ້ຽມຢາມແລະທັດສະນະສຶກສາຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ກໍໄດ້ແລກປ່ຽນຂໍ້ມູນຂ່າວສານກ່ຽວຂ້ອງກັບວຽກງານທີ່ກ່າວມາຂ້າງເທິງ ໂດຍການຍົກໃຫ້ເຫັນການນຳໃຊ້ເຕັກນິກທັນສະໄໝ, ການນຳໃຊ້ພາຫະນະສື່ສານແບບອອນລາຍ ເຂົ້າໃນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ວຽກງານສື່ມວນຊົນ, ການສະໜອງຂໍ້ມູນຂ່າວສານ ແລະວຽກງານການພົວພັນປະສານງານຂອງສະພາແຫ່ງຊາດລາວ; ພ້ອມກັນນີ້, ຍັງໄດ້ຮ່ວມກັນປຶກສາຫາລືຊອກຫາຊ່ອງທາງໃນການຮ່ວມມື, ການສະໜັບສະໜູນ ແລະ ການຊ່ວຍເຫຼືອ ເຊິ່ງກັນແລະກັນໃນວຽກງານການແລກປ່ຽນ, ການສ້າງລະບົບນຳໃຊ້ຖານຂໍ້ມູນຂ່າວສານຂອງລັດຖະສະພາໃນຕໍ່ໜ້າອີກດ້ວຍ.



## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ວິຊາການຈາກສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ການເຝິກອົບຮົມວຽກງານບໍລິຫານ ແລະ ພິທີການ ໃຫ້ແກ່ພະນັກງານທີ່ຮັບໃຊ້ໃນການເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45 ໃນຄັ້ງນີ້ ແມ່ນເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ທັກສະຕ່າງໆກ່ຽວກັບການກະກຽມຄວາມພ້ອມໃຫ້ແກ່ພະນັກງານຮັບໃຊ້ກອງປະຊຸມແລະພະນັກງານປະສານງານແລະອາສາສະໝັກ (LOs/VOs) ໃຫ້ມີຄວາມຮູ້, ຄວາມເຂົ້າໃຈເປັນຢ່າງດີໃນດ້ານວຽກງານການປະສານງານ, ພິທີການ ແລະ ບົດຮຽນຕ່າງໆໃນການຮັບແຂກຕ່າງປະເທດທີ່ມາເຂົ້າຮ່ວມກອງປະຊຸມສາກົນ ທີ່ ສປປ ລາວ ເປັນເຈົ້າພາບ ແນໃສ່ການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການຕ້ອນຮັບຄະນະຜູ້ແທນລັດຖະສະພາຈາກປະເທດຕ່າງໆທີ່ຈະເດີນທາງມາເຂົ້າຮ່ວມກອງປະຊຸມໄອປາ ໃນນັ້ນມີ 10 ລັດຖະສະພາປະເທດສະມາຊິກແລະ 23ລັດຖະສະພາປະເທດສັງເກດການ, ຜູ້ແທນທີ່ຖືກເຊີນຈຳນວນໜຶ່ງ ເຊິ່ງຄາດຄະເນວ່າມີຈຳນວນຜູ້ແທນຫຼາຍກວ່າ 300 ທ່ານ. ທ່ານເລຂາທິການສະພາແຫ່ງຊາດຍັງໄດ້ຮຽກຮ້ອງບັນດາທ່ານວິທະຍາກອນ ແລະ ສຳມະນາກອນຈົ່ງໄດ້ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ເອົາໃຈໃສ່ເຂົ້າຮ່ວມ ແລະ ສຸມໃສ່ຄົ້ນຄວ້າປະກອບຄວາມຄິດເຫັນຢ່າງສ້າງສັນ, ກົງໄປກົງມາ, ຍົກໃຫ້ເຫັນບົດຮຽນ ແລະ ສະພາບຄວາມເປັນຈິງ ແນໃສ່ກະກຽມຄວາມພ້ອມຮອບດ້ານໃນວຽກງານຂອງອະນຸກຳມະການບໍລິຫານ, ພິທີການ, ສະຖານທີ່, ພາຫະນະ ແລະ ປະດັບປະດາເພື່ອກະກຽມ ແລະ ຮັບໃຊ້ການເປັນເຈົ້າພາບກອງປະຊຸມໄອປາ ຄັ້ງທີ 45ແລະ ກອງປະຊຸມປີ່ນອ້ອມໃຫ້ມີຜົນສຳເລັດຢ່າງຈົບງາມ. ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ໂດຍທ່ານໃຫ້ຮູ້ວ່າ: ໃນລະຫວ່າງວັນທີ 18-24 ຕຸລາ 2024 ສປປ ລາວ ຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45 ເຊິ່ງເປັນກອງປະຊຸມທີ່ມີຄວາມສຳຄັນຂອງລັດຖະສະພາບັນດາປະເທດອາຊຽນ ໂດຍໝູນວຽນກັນເປັນເຈົ້າພາບຈັດຂຶ້ນປີລະຄັ້ງ ເພື່ອທົບທວນຄືນການປະຕິບັດວຽກງານຕ່າງໆຂອງໄອປາໃນປີຜ່ານມາ ແລະປຶກສາຫາລືເອກະພາບກັນວຽກງານໃນຕໍ່ໜ້າເຊິ່ງຈະມີກອງປະຊຸມປີ່ນອ້ອມຫຼາຍກອງປະຊຸມທີ່ປະເທດເຈົ້າພາບຈະຕ້ອງໄດ້ກະກຽມ ເປັນຕົ້ນ: ກອງປະຊຸມກຳມາທິການການເມືອງຄວາມໝັ້ນຄົງ, ກຳມາທິການວຽກງານເສດຖະກິດ, ກຳມາທິການວຽກງານວັດທະນະທຳ, ວຽກງານຈັດຕັ້ງພາຍໃນໄອປາ, ວຽກງານສະມາຊິກລັດຖະສະພາເພດຍິງ (WAIPA), ວຽກງານສະມາຊິກລັດຖະສະພາໜຸ່ມ ແລະ ກອງປະຊຸມກັບບັນດາປະເທດສັງເກດການ ຈຳນວນ 23 ປະເທດ. ພາຍຫຼັງທີ່ປະເທດລາວ ໄດ້ຮັບການມອບໝາຍໃຫ້ເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາຄັ້ງທີ 45 ຈາກປະເທດອິນໂດເນເຊຍ ໃນປີ2023, ກໍໄດ້ມີການແຕ່ງຕັ້ງຄະນະຊີ້ນຳລະດັບຊາດ ໂດຍມີທ່ານປະທານສະພາແຫ່ງຊາດ ເປັນປະທານ, ແຕ່ງຕັ້ງອະນຸກຳມະການກອງເລຂາແຫ່ງຊາດ, ບັນດາອະນຸກຳມະການ, ຄະນະຮັບຜິດຊອບການສ້າງຄວາມເຂັ້ມແຂງໃນການກະກຽມເປັນເຈົ້າ ພາບຈັດກອງປະຊຸມ ແລະ ອື່ນໆ; ການແຕ່ງຕັ້ງບຸຄະລາກອນເຂົ້າໃນຄະນະຮັບຜິດຊອບ ແລະ ຮັບໃຊ້ກອງປະຊຸມ ແມ່ນໄດ້ຄັດເລືອກເອົາຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການ, ເຂົ້າໃຈຫຼັກການ ແລະ ກົດລະບຽບກອງປະຊຸມໄອປາ, ມີລະດັບພາສາອັງກິດທີ່ແນ່ນອນ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ມີຄຳເຫັນແລກປ່ຽນບາງບັນຫາ ໂດຍເນັ້ນໜັກໃຫ້ມີການເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ, ຕໍ່ວຽກງານທີ່ໄດ້ຮັບມອບໝາຍ ແລະ ສຸມສະຕິປັນຍາຫົວຄິດປະດິດສ້າງເຂົ້າໃນວຽກງານຕົວຈິງ, ເຝິກທັກສະ ແລະ ບົດຮຽນການເປັນເຈົ້າພາບທີ່ດີ ແລະ ປະຕິບັດທຸກໜ້າທີ່ວຽກງານໃຫ້ປະສົບຜົນສຳເລັດ; ຍົກລະດັບຄວາມຮູ້, ຄວາມສາມາດ ແລະ ທັກສະກ່ຽວກັບການກະກຽມຄວາມພ້ອມຮັບໃຊ້ກອງປະຊຸມຂອງພະນັກງານຜູ້ປະສານງານ ໃຫ້ມີຄວາມຮູ້ທາງດ້ານບໍລິຫານ-ພິທີການ, ເຕັກນິກການປະສານງານ, ການສື່ສານດ້ານພາສາອັງກິດ ແລະ ພາສາປະເທດທີ່ເຂົ້າຮ່ວມກອງປະຊຸມ ພ້ອມທັງເປັນໂອກາດເຜີຍແຜ່ວັດທະນະທຳ, ມູນເຊື້ອປະຫວັດສາດ, ສິລະປະ, ສະຖານທີ່ທ່ອງທ່ຽວ ແລະ ດ້ານອື່ນໆຂອງປະເທດເຮົາຕໍ່ແຂກຕ່າງປະເທດໃຫ້ຮັບຮູ້ຄວາມເປັນຈິງຂອງປະເທດເຮົາ; ສ້າງພື້ນຖານຄວາມຮູ້ ແລະ ຄວາມເຂົ້າໃຈຕໍ່ວຽກງານດ້ານພິທີການທູດ, ຫຼັກການທາງດ້ານການທູດແລະລະບຽບການກ່ຽວກັບການຮັບແຂກຕ່າງປະເທດ ເພື່ອໃຫ້ພະນັກງານຮັບໃຊ້ກຳໄດ້ຂັ້ນຕອນການກະກຽມຈັດກອງປະຊຸມລະດັບສາກົນໃນຄັ້ງນີ້.

ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີຂໍ້ມູນທົ່ວໄປຂອງກອງປະຊຸມ, ລະບຽບຫຼັກການໃນການຈັດກອງປະຊຸມໄອປາ ແລະ ກອງປະຊຸມປີ່ນອ້ອມຕ່າງໆ; ວຽກງານພິທີການໃນການກະກຽມສະຖານທີ່ຈັດກອງປະຊຸມ, ໂຮງແຮມ (ທີ່ພັກຄະນະຜູ້ແທນ), ຂະບວນລົດ-ພາຫະນະ, ການອອກຮັບ-ສົ່ງຄະນະຜູ້ແທນ, ງານລ້ຽງຕ້ອນຮັບ, ພິທີການເປີດ-ປິດກອງປະຊຸມ; ໜ້າທີ່ຮັບຜິດຊອບຂອງພະນັກງານLOs/VOs ໃນການຮັບໃຊ້ກອງປະຊຸມສາກົນຕ່າງໆ; ຂັ້ນຕອນໃນການປະສານງານ, ການສ້າງແຜນການ ແລະ ຕາຕະລາງເຄື່ອນໄຫວໃນຂອບຫຼາຍຝ່າຍ ແລະ ຂອບສອງຝ່າຍ; ວຽກງານສຸຂະພາບ ແລະການໃຫ້ບໍລິການຂອງແພດໃນກອງປະຊຸມສາກົນ; ການນຳໃຊ້ພາຫະນະຮັບໃຊ້ກອງປະຊຸມສາກົນ ແລະ ການຈັດຂະບວນລົດໃນການຕ້ອນຮັບແຂກຕ່າງປະເທດລະດັບຕ່າງໆ; ການກະກຽມ ແລະ ດຳເນີນກອງປະຊຸມສຸດຍອດອາຊຽນ; ວຽກງານພິທີການທູດ ແລະ ມາລະຍາດທາງສັງຄົມ ແລະ ອື່ນໆ.

**(ນາງ ອານິຕາ ມ່ອນສະຫວັດ)**

## ສູນທອນພົດ...

(ຕໍ່ຈາກໜ້າ 1)

ງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ກໍຄືການສືບຕໍ່ປະຕິບັດ 2 ວາລະແຫ່ງຊາດ ທີ່ພວມດຳເນີນໄປດ້ວຍບາດ ກ້າວອັນໜັກແໜ້ນ.

ສະພາແຫ່ງຊາດ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເຊິ່ງໄດ້ເອົາໃຈໃສ່ໃນການເຄື່ອນໄຫວວຽກງານໃນໄລຍະ 6 ເດືອນຕົ້ນປີ 2024 ໃນທ່າມກາງສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ພວມມີການຜັນແປໄປຢ່າງສັບສົນ, ວ່ອງໄວ, ສະຫຼັບຊັບຊ້ອນ, ຄາດຄະເນໄດ້ຍາກ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ບັນດາປະເທດໃນໂລກລວມທັງ ສປປ ລາວ ຂອງພວກເຮົາ ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຊິ່ງເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍ ພົບຫຼາຍສິ່ງທ້າທາຍໃໝ່ ເຊິ່ງສົ່ງຜົນກະທົບຕໍ່ການພັດທະນາ, ການດຳລົງຊີວິດຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ. ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງຄະນະບໍລິຫານງານສູນກາງພັກ, ການເຮັດວຽກຮ່ວມກັນຢ່າງໃກ້ຊິດ ແລະ ເປັນເອກະພາບ ລະຫວ່າງສະພາແຫ່ງຊາດ ແລະ ລັດຖະບານ ເຮັດໃຫ້ປະເທດເຮົາ ສາມາດສືບຕໍ່ມີການພັດທະນາ, ມີມາດຕະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ເຮັດໃຫ້ບັນດາຄາດໝາຍທາງດ້ານເສດຖະກິດ-ສັງຄົມຈຳນວນບໍ່ໜ້ອຍ ສາມາດບັນລຸໄດ້ຕາມແຜນ ແລະ ຄາດໝາຍ ຈຳນວນໜຶ່ງປະຕິບັດໄດ້ລື່ນແຜນ ເຊິ່ງເປັນການປະກອບສ່ວນເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຍັງສືບຕໍ່ມີທ່າອ່ຽງເຕີບໂຕແລະຂະຫຍາຍຕົວຕໍ່ເນື່ອງ.

ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1). ບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາຕິດພັນການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ 2024 ແລະ ແຜນການ 6 ເດືອນທ້າຍປີ 2024;

2). ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 6 ເດືອນຕົ້ນປີ 2024 ແລະ ແຜນການ 6 ເດືອນທ້າຍປີ 2024;

3). ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໄລຍະ 6 ເດືອນຕົ້ນປີ 2024 ແລະ ແຜນການ 6 ເດືອນທ້າຍ ປີ 2024;

4). ບົດລາຍງານການຈັດຕັ້ງປະຕິບັດແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ 2024 ແລະ ແຜນການ6 ເດືອນທ້າຍປີ2024;

5). ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາໂຄງການລົງທຶນແຮ່ທາດ ໃນໄລຍະຜ່ານມາ ແລະ ກຳນົດແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ວ່າດ້ວຍການຮັບຮອງເອົາວິໄສທັດຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດຮອດປີ 2030;

6). ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022;

7). ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການແກ້ໄຂຜົນການກວດສອບປະຈຳປີ 2022;

8.) ບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX;

9). ບົດລາຍງານກ່ຽວກັບການກະກຽມປັບປຸງບາງເນື້ອໃນລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015;

10). ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 13 ສະບັບ; ໃນນີ້, ມີກົດໝາຍສ້າງໃໝ່ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ, ຮ່າງກົດໝາຍວ່າດ້ວຍສະຫະກອນ; ກົດໝາຍປັບປຸງ 11 ສະບັບຄື: ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດຈ໌ໄອວີ/ພະຍາດເອດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍການທ່ອງທ່ຽວ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ນອກນັ້ນ, ກອງປະຊຸມຄັ້ງນີ້ຍັງຈະໄດ້ຮັບຟັງການຊີ້ແຈງຂອງສະມາຊິກລັດຖະບານແລະພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ກອງປະຊຸມສະໄໝສາມັນເທື່ອທີ 7 ຄັ້ງນີ້ ຈະໄດ້ພິຈາລະນາຕົກລົງຫຼາຍເນື້ອໃນທີ່ສຳຄັນ ແລະ ເພື່ອເຮັດໃຫ້ການພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດທີ່ມີຈຳນວນຫຼາຍຄືດັ່ງກ່າວໃຫ້ມີຄຸນນະພາບ, ມີປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະ ເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້; ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕ, ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນໃນການສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າຢ່າງເລິກເຊິ່ງ, ປະກອບຄຳເຫັນຕໍ່ທຸກບັນຫາຕ່າງໆຢ່າງຖີ່ຖ້ວນ, ສ້າງສັນ, ພາວະວິໄສ, ມີເຫດມີຜົນ, ແທດຕົວຈິງ, ຮັດກຸມ ບົນພື້ນຖານແນວທາງປ່ຽນແປງໃໝ່ຂອງພັກ, ລັດຖະທຳມະນູນ, ກົດໝາຍຂອງລັດແລະສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມ ຕາມເງື່ອນໄຂຕົວຈິງຂອງປະເທດເຮົາໃນປັດຈຸບັນພ້ອມທັງຊອກຫາວິທີການ, ມາດຕະການແກ້ໄຂທີ່ສອດຄ່ອງຕໍ່ບັນດາບັນຫາທີ່ສັງຄົມຍັງມີຄວາມເປັນຫ່ວງ, ບັນຫາຮີບດ່ວນ ແລະ ເຄັ່ງຮ້ອນຂອງສັງຄົມພວກເຮົາໃນປັດຈຸບັນ ເພື່ອສ້າງຄວາມເປັນເອກະພາບສູງຕໍ່ເນື້ອໃນທີ່ນຳມາພິຈາລະນາໃຫ້ມີຄຸນນະພາບ ຈົນກ້າວໄປເຖິງການຮັບຮອງໃນກອງປະຊຸມຄັ້ງນີ້ ແລະ ສາມາດນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳຢ່າງແທ້ຈິງ.

ໃນໂອກາດອັນສະຫງ່າລາສີນີ້, ໃນນາມປະທານກອງປະຊຸມ, ຂໍປະກາດໄຂກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

# ກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນ ກັບອົງການປົກຄອງແຂວງອຸດົມໄຊ




(ສພຊ) - ເພື່ອຮັບປະກັນໃນການພິຈາລະນາບັນຫາສຳຄັນຂອງແຂວງ, ການສ້າງນິຕິກຳ, ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງອົງການລັດຢູ່ໃນວາລະກອງປະຊຸມສະພາປະຊາຊົນແຂວງ ທັງຮັບປະກັນບັນດາເນື້ອໃນ ໃຫ້ມີຄຸນນະພາບ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ-ລັດ ແລະ ເປັນການສະໜອງຂໍ້ມູນຕ່າງໆໃຫ້ແກ່ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ທີ່ຈະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄຂຂຶ້ນລະຫວ່າງວັນທີ 10 ມິຖຸນາ-2 ກໍລະກົດ 2024 ທີ່ນະຄອນຫຼວງວຽງຈັນ.

ຕອນເຊົ້າຂອງວັນທີ 6 ມິຖຸນາ 2024 ທີ່ຫ້ອງປະຊຸມຂອງຫ້ອງວ່າແຂວງອຸດົມໄຊ ໄດ້ຈັດກອງປະຊຸມຮ່ວມ ລະຫວ່າງສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງອຸດົມໄຊ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ ແລະ ທ່ານ ສົມຈິດ ປັນຍາສັກ ຮອງເຈົ້າແຂວງ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ພະແນການ-ອົງການ, ສອງກອງບັນຊາການ ແລະ ພະນັກງານວິຊາການເຂົ້າຮ່ວມ.

ການຈັດກອງປະຊຸມຄັ້ງນີ້, ແມ່ນເພື່ອຄົ້ນຄວ້າ, ປຶກສາຫາລື, ເອກະພາບບັນດາຫົວຂໍ້ຕ່າງໆ, ດ້ານເນື້ອໃນທີ່ຈະນຳມາພິຈາລະນາຮັບຮອງໃນວາລະກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາປະຊາຊົນແຂວງຊຸດທີ II ທີ່ຈະໄຂຂຶ້ນໃນຕໍ່ໜ້າ ທັງເພື່ອຮັບປະກັນດ້ານເນື້ອໃນຕ່າງໆໃຫ້ຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບຕົວຈິງກໍຄືທ້ອງຖິ່ນ, ຄະນະປະທານກອງປະຊຸມຍັງໄດ້ມີຄຳເຫັນຊີ້ນຳແຕ່ລະໜ້າວຽກທີ່ຂຶ້ນກັບຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ເປັນຕົ້ນແມ່ນ: ບັນດາບົດລາຍງານຂອງອົງການປົກຄອງແຂວງ, ຮ່າງນິຕິກຳໃຕ້ກົດໝາຍແລະບັນຫາພົ້ນເດັ່ນອື່ນໆທີ່ຈະນຳມາຜ່ານໃນກອງປະຊຸມ. ຢູ່ໃນກອງປະຊຸມ, ໄດ້ຮັບຟັງການຜ່ານຮ່າງແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II, ເຊິ່ງຄາດຄະເນຈະດຳເນີນກອງປະຊຸມ ລະຫວ່າງ ວັນທີ 16-17 ກໍລະກົດ 2024; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມທັງປະກອບຄຳຄິດເຫັນ, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເປັນຂະບວນຟົດຟື້ນ.

ພາຍຫຼັງສຳເລັດກອງປະຊຸມຄັ້ງນີ້, ຄະນະຮັບຜິດຊອບຍັງຈະໄດ້ລວບລວມບັນດາຫົວຂໍ້ຕ່າງໆ, ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ຈະສືບຕໍ່ປະສານສົມທົບກັນໃຫ້ກົມກຽວ.

**(ສີແຫວງ ສີບຸນເຮືອງ)**

# ສພຂ ຊຽງຂວາງ ຕິດຕາມກວດກາ ວຽກງານຂົງເຂດຍຸຕິທຳ ແລະ ປກຊ-ປກສ



(ສພຊ) - ໃນລະຫວ່າງວັນທີ30-31ພຶດສະພາ2024 ທ່ານນາງສົມພອນ ໂສພິລາວັນ ຮອງປະທານສະພາປະຊາຊົນແຂວງຊຽງຂວາງ ພ້ອມດ້ວຍພະນັກງານສະພາປະຊາຊົນແຂວງ ໄດ້ລົງຕິດຕາມກວດກາວຽກງານຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ເມືອງຜາໄຊແຂວງຊຽງຂວາງ ໂດຍການເຂົ້າຮ່ວມຂອງທ່ານ ບຸນມາ ສຸຍະວົງ ເຈົ້າເມືອງຜາໄຊ, ມີບັນດາຫົວໜ້າ-ຮອງຫົວໜ້າ ແລະ ພະນັກງານທີ່ຢູ່ໃນຂົງເຂດຍຸຕິທຳ ແລະ ປກຊ-ປກສ ເຂົ້າຮ່ວມ.

ທັງນີ້, ກໍເພື່ອເປັນການຕິດຕາມກວດກາຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາແລະເປັນການເກັບກຳຂໍ້ມູນໃຫ້ແກ່ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ ໃນຂົງເຂດຂົງເຂດຍຸຕິທຳ ແລະ ປກຊ-ປກສ ເພື່ອລາຍງານໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ຊຸກຍູ້ວຽກງານວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

ໃນໂອກາດຄັ້ງນີ້, ທ່ານຄຳຫຼ້າ ແກ້ວດາວັນ ຮອງເລຂາພັກເມືອງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຜາໄຊ ໄດ້ລາຍງານໂດຍຫຍໍ້ ໃນການຈັດຕັ້ງປະຕິບັດວຽກງານຂົງເຂດຍຸຕິທຳແລະ ປກຊ-ປກສ ຂອງອົງການປົກຄອງເມືອງ, ຮັບຟັງບົດລາຍງານໂດຍຫຍໍ້ ການຈັດຕັ້ງປະຕິບັດລັດຖະທຳມະນູນແລະກົດໝາຍຂອງກອງບັນຊາການປກສເມືອງ, ຮັບຟັງລາຍງານໂດຍຫຍໍ້ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໄລຍະຜ່ານມາຢູ່ເມືອງ, ລາຍງານໂດຍຫຍໍ້ບັນຫາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢູ່ຫ້ອງການຍຸຕິທຳເມືອງ, ບົດລາຍງານໂດຍຫຍໍ້ກ່ຽວກັບວຽກງານປ້ອງກັນຊາຍແດນ ແລະ ແກ້ໄຂບັນຫາຢາເສບຕິດ ທີ່ລຽບຕາມຊາຍແດນ, ບົດລາຍງານໂດຍຫຍໍ້ ຂອງຫ້ອງການສະຫະພັນນັກຮົບເກົ່າເມືອງ ເຊິ່ງຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະສະພາບຄວາມເປັນຈິງຂອງການເຄື່ອນໄຫວວຽກງານຂອງແຕ່ລະຂົງເຂດ; ພ້ອມນັ້ນ, ຄະນະສະມາຊິກສະພາປະຊາຊົນແຂວງຍັງໄດ້ມີເຈາະຈີ້ມຄຳຖາມເຈາະຈີ້ມທີ່ກ່ຽວພັນກັບບັນດາຫ້ອງການຂອງເມືອງ ເປັນຕົ້ນແມ່ນການຄຸ້ມຄອງອ້າຍນ້ອງໃນເຂດຫ່າງໄກສອກຫຼີກ, ການຄຸ້ມຄອງອາວຸດລ່າເນື້ອ, ການແກ້ໄຂບັນຫາຢາເສບຕິດ, ການດຳເນີນຄະດີຂອງເຈົ້າໜ້າທີ່ ແລະ ບັນຫາອື່ນໆອີກ. ໃນນັ້ນທີມງານທີ່ມາຈາກສະພາປະຊາຊົນແຂວງພ້ອມດ້ວຍການນຳເມືອງ ໄດ້ເດີນທາງໄປບ້ານຫໍໄຊ ເມືອງຜາໄຊ ແຂວງຊຽງຂວາງ ເພື່ອເກັບກຳຄຳຄິດຄຳເຫັນຂອງປະຊາຊົນຢູ່ບ້ານດັ່ງກ່າວ ໃນການເຄື່ອນໄຫວວຽກງານ ປກຊ-ປກສ ແລະ ການແກ້ໄຂບັນຫາຢາເສບຕິດຂອງບ້ານ ເພື່ອນຳສະເໜີຂັ້ນເທິງແກ້ໄຂໃຫ້ຖືກຕ້ອງແລະທັນເວລາ.

ໃນຕອນທ້າຍ, ຄະນະປະທານຍັງໄດ້ມີຄຳເຫັນໂອ້ລົມທັງສະຫຼຸບຕີລາຄາການປະເມີນຜົນການຈັດຕັ້ງປະຕິບັດວຽກງານໃນຂົງເຂດຍຸຕິທຳ ແລະ ປກຊ-ປກສ ເຫັນວ່າມີຫຼາຍດ້ານໄດ້ຮັບຜົນສຳເລັດ ແລະ ຍັງມີບາງດ້ານທີ່ຕ້ອງປັບປຸງແກ້ໄຂ ໃຫ້ທຸກສະຫາຍຈົ່ງເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ອັນສຳຄັນ ທີ່ພັກລັດມອບໝາຍໃຫ້ໄດ້ຮັບຜົນສຳເລັດ ແລະ ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍທີ່ວາງໄວ້; ເຮັດໃຫ້ປະເທດຊາດ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

ການຕິດຕາມກວດກາຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌(STEPs)ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ສຸກສະຫວັນ ອິນທະແສງ)**

# ກະກຽມຂໍ້ມູນໃຫ້ ສສຊ ເຂດ 14 ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 7



(ສພຊ) - ຕອນບ່າຍຂອງວັນທີ 5 ມິຖຸນາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນສະພາປະຊາຊົນແຂວງສາລະວັນ ຈັດກອງປະຊຸມຮ່ວມກັບບັນດາພະແນກການຂົງເຂດເສດຖະກິດ ປຶກສາຫາລືຄວາມເປັນເອກະພາບດ້ານຂໍ້ມູນເນື້ອໃນທີ່ຈະນຳສະເໜີ ແລະ ປະກອບຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງ ທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ; ເຂົ້າຮ່ວມມີສະມາຊິກສະພາແຫ່ງຊາດ (ສສຊ) ສະມາຊິກສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າພະແນກການຂົງເຂດເສດຖະກິດ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ວິຊາການເຂົ້າຮ່ວມ.

ທັງນີ້, ກໍເພື່ອເອກະພາບກັນດ້ານການສະໜອງຂໍ້ມູນເນື້ອໃນຂອງສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2024 ພາຍໃນແຂວງ, ບັນຫາເຄັ່ງຮ້ອນ ແລະ ທາງສຽງຈາກສັງຄົມ, ຂໍ້ມູນເຫຼົ່ານີ້ຈະເປັນຂໍ້ມູນສຳຄັນໃຫ້ແກ່ສະມາຊິກສະພາແຫ່ງຊາດ ນຳສະເໜີ ແລະ ປະກອບຄຳຄິດຄຳເຫັນຕໍ່ລັດຖະບານ ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະເປີດຂຶ້ນໃນວັນທີ 10 ມິຖຸນາ-2 ກໍລະກົດ 2024 ທີ່ຫໍສະພາແຫ່ງຊາດ.

ວາລະຂອງກອງປະຊຸມ, ບັນດາທ່ານທີ່ເຂົ້າຮ່ວມໄດ້ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສຸມໃສ່ປຶກສາຫາລືປະກອບຄຳເຫັນເຊິ່ງໜ້າກັບທີ່ ຕໍ່ກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທ້າຍຕ່າງໆ ຕາມປະທານກອງປະຊຸມໄດ້ເຈາະຈີ້ມ ເຊັ່ນ: ບັນຫາວຽກງານການຄຸ້ມຄອງທີ່ດິນ, ບັນຫາການຄຸ້ມຄອງການຈັດເກັບລາຍຮັບເຂົ້າງົບປະມານ, ວຽກງານໂທລະຄົມ ແລະ ການສື່ສານ, ວຽກງານການຂຸດຄົ້ນແຮ່ທາດ, ວຽກງານການຄຸ້ມຄອງສິນຄ້າສົ່ງອອກ-ນຳເຂົ້າ, ພື້ນຖານໂຄງລ່າງ ແລະ ບັນຫາອື່ນໆທີ່ຈະສະເໜີໃຫ້ລັດຖະບານຊ່ວຍຫາທາງແກ້ໄຂ.

**(ດີລຳພົນ ພົມມະຈັນ)**

# ສພຂ ຫົວພັນ ແລະ ແທັງຮວ່າ ແລກປ່ຽນບົດຮຽນຮ່ວມກັນ




(ສພຊ) - ໂດຍປະຕິບັດຕາມເນື້ອໃນບົດບັນທຶກຊ່ວຍຈຳຂອງກອງປະຊຸມພົບປະແລກປ່ຽນບົດຮຽນການເຄື່ອນໄຫວລະຫວ່າງສະພາປະຊາຊົນແຂວງ (ສພຂ)ຫົວພັນແຫ່ງສປປລາວ ແລະ ສພຂ ແທັງຮວ່າ ແຫ່ງ ສສ. ຫວຽດນາມ ໃນຄັ້ງວັນທີ 29 ກັນຍາ 2022 ທີ່ນະຄອນເຊີມເຊີນ ແຂວງແທັງຮ່ວາ ສສ. ຫວຽດນາມ.

ລະຫວ່າງວັນທີ29-31 ພຶດສະພາ 2024 ສພຂ ຫົວພັນ ນຳໂດຍສະຫາຍ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ຮັກສາການປະທານສະພາປະຊາຊົນແຂວງຫົວພັນ ພ້ອມດ້ວຍຄະນະ ໄດ້ໄປຢ້ຽມຢາມ ແລະ ເຮັດວຽກຢູ່ ແຂວງແທັງຮ່ວາ ສສ. ຫວຽດນາມ, ໂດຍໄດ້ຮັບການຕ້ອນຮັບຈາກສະຫາຍ ເລຕຽນລາມ ຄະນະປະຈຳພັກແຂວງ, ຮອງປະທານຜູ້ປະຈຳການ ສພຂ ແທັງຮ່ວາ ສສ. ຫຽວດນາມ.

ກອງປະຊຸມພົບປະແລກປ່ຽນບົດຮຽນຄັ້ງນີ້, ສອງຝ່າຍໄດ້ຜັດປ່ຽນກັນລາຍງານສະພາບເສດຖະກິດ-ສັງຄົມ, ການເຄື່ອນໄຫວວຽກງານຂອງສພຂ, ການພົວພັນ ແລະ ການຮ່ວມມືລະຫວ່າງແຂວງແທັງຮ່ວາ ແລະ ແຂວງຫົວພັນ; ຈາກນັ້ນ, ກໍໄດ້ພ້ອມກັນສົນທະນາແລກປ່ຽນຄຳຄິດ, ຄຳເຫັນ ແລະ ປຶກສາຫາລືຖອດຖອນບົດຮຽນເຊິ່ງກັນແລະກັນ ເພື່ອເພີ່ມທະວີການພົວພັນ,ຄວາມສາມັກຄີແບບພິເສດ ແລະການຮ່ວມມືລະຫວ່າງສອງແຂວງໃຫ້ມີມິດຕະພາບ ແລະ ພັດທະນາດີຂຶ້ນເລື້ອຍໆ

ໃນໂອກາດນີ້, ຄະນະຜູ້ແທນຂອງ ສພຂ ສອງແຂວງຫົວພັນ-ແທັງຮ່ວາ ຍັງໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ໂດ້ ຈ້ອງຮຶງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງແທັງຮ່ວາແລະຍັງໄດ້ໄຕ້ທູບບູຊາ ແລະ ວາງກະຕ່າດອກໄມ້ຢູ່ເຂດວັດທະນະທຳອະນຸສອນສະຖານປະທານ ໂຮ່ ຈີ່ມິງ ທັງທັດສະນະສຶກສາເຂດຮ່ອງຮອຍປະຫວັດສາດລາມກິງແຂວງແທັງຮ່ວາ ຕື່ມອີກ.

# ສະພາປະຊາຊົນແຂວງຄຳມ່ວນ ສະຫຼຸບວຽກງານຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ



(ສພຊ) -ຕອນເຊົ້າຂອງວັນທີ 31 ພຶດສະພາ 2024 ທີ່ສຳນັກງານສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ແລະ ຈັດພິທີມອບໃບຍ້ອງຍໍ ປະຈຳປີ 2023 ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບົວພັນ ແສງຈັນ ກຳມະການພັກແຂວງ,ຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບການເຄື່ອນໄຫວວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ຈາກນັ້ນ, ກອງປະຊຸມໄດ້ຈັດພິທີມອບໃບຍ້ອງຍໍໃຫ້ບຸກຄົນດີເດັ່ນ ເຊິ່ງຜ່ານການປະເມີນຜົນຂະບວນການແຂ່ງຂັນປະກອບມີພະນັກງານມີປະເພດດີຫຼາຍ ແລະປະເພດດີ, ບຸກຄົນດີເດັ່ນທີ່ໄດ້ຮັບໃບຍ້ອງຍໍປະເພດດີຫຼາຍຈຳນວນ 45 ທ່ານ ຍິງ 22 ທ່ານ ແລະ ບຸກຄົນດີເດັ່ນທີ່ໄດ້ຮັບໃບຍ້ອງຍໍປະເພດດີຈຳນວນ 9 ທ່ານ ຍິງ 3 ທ່ານ ໂດຍໃບຍ້ອງຍໍຂອງທ່ານເຈົ້າແຂວງຄຳມ່ວນ ແມ່ນມອບໂດຍທ່ານ ບົວພັນ ແສງຈັນ ແລະ ໃບຍ້ອງຍໍຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ແມ່ນມອບໂດຍທ່ານ ຄຳສຸກ ວັນທະວົງສາ ຄະນະປະຈຳສະພາປະຊາຊົນແຂວງ.

ໃນກອງປະຊຸມຄັ້ງນີ້, ບັນດາຕາງໜ້າຄະນະຮັບຜິດຊອບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໄດ້ຂຶ້ນຈັບມືແຂ່ງຂັນ ປະຈຳປີ 2024 ໂດຍເປັນການສືບຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານເສນາທິການໃຫ້ແກ່ສະພາປະຊາຊົນແຂວງດ້ວຍຄາດໝາຍຂອງການແຂ່ງຂັນ ໃຫ້ໄວ, ໃຫ້ດີ, ໃຫ້ຫຼາຍ, ໃຫ້ຖືກກົດໝາຍແລະເນື້ອໃນການແຂ່ງຂັນ ມີ 3 ຂໍ້ຄື: 1.ແຂ່ງຂັນການຈັດຕັ້ງປະຕິບັດວຽກງານທີ່ດີມີວິທະຍາສາດ;2. ແຂ່ງຂັນປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ ແລະ 3. ແຂ່ງຂັນປະຕິບັດວຽກງານດ້ານວິຊາສະເພາະ, ຍົກສູງຄວາມເປັນເຈົ້າການປັບປຸງກົງຈັກການຈັດຕັ້ງແລະແບບແຜນວິທີການເຮັດວຽກ ໃຫ້ມີປະສິດທິພາບ.

ຕອນທ້າຍກອງປະຊຸມ, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະຕີລາຄາສູງຕໍ່ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາ ເຊິ່ງບັນດາ, ຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນ ໄດ້ເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານ ຕາມພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ວຽກງານຂອງສະພາປະຊາຊົນແຂວງຄຳມ່ວນສຳເລັດຕາມແຜນການທີ່ວາງໄວ້ ໂດຍສະເພາະການປະຕິບັດ 3 ພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງຄື: ພິຈາລະນາ ແລະ ຮັບຮອງນິຕິກຳໃຕ້ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ, ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ,ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາອົງການລັດຂັ້ນແຂວງ; ພ້ອມນັ້ນ,ທ່ານຍັງໄດ້ເນັ້ນໜັກໃຫ້ບັນດາສະມາຊິກພັກ ແລະ ພະນັກງານ-ລັດຖະກອນຈົ່ງສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີແລະເພີ່ມທະວີຄວາມສາມາດໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຜົນສຳເລັດ ແລະ ມີປະສິດທິພາບສູງ.

**(ເອື້ອ ມະໂນສິງ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ດຳເນີນງານຂອງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ, ຮ່າງຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງກອງເລຂາ ແລະ ອະນຸກຳມະການ, ຮ່າງຂໍ້ຕົກລົງວ່າດ້ວຍການແບ່ງງານພາຍໃນຄະນະກຳມະການລະດັບຊາດ ແລະ ຄະນະປະຈຳການປັບປຸງລັດຖະທຳມະນູນ, ຮ່າງແຜນການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015; ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີຮັບຮອງເອົາໂດຍຫຼັກການຕໍ່ບັນດາເອກະສານສຳຄັນກ່ຽວກັບວຽກງານປັບປຸງລັດຖະທຳມະນູນ ແລະ ມອບໃຫ້ຜູ້ປະຈຳການຊີ້ນຳກອງເລຂາ ຮີບຮ້ອນປັບປຸງບັນດາເອກະສານດັ່ງກ່າວຕາມຄວາມເຫັນຂອງບັນດາທ່ານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ເພື່ອຈັດຕັ້ງປະຕິບັດໃຫ້ທັນເວລາ.

ທ່ານປະທານສະພາແຫ່ງຊາດ ໄດ້ມີຄຳເຫັນເນັ້ນໜັກໃຫ້ຄົ້ນຄວ້າເນື້ອໃນ ຫຼື ກຳນົດບັນຫາໃຫຍ່, ບັນຫາທີ່ເປັນຫຼັກການລວມ; ສ່ວນຂໍ້ກຳນົດ ຫຼື ຂໍ້ບັນຍັດລະອຽດ ໃຫ້ກຳນົດໃນກົດໝາຍຂົງເຂດຕ່າງໆ. ໃຫ້ແຕ່ລະອະນຸກຳມະການ ກຳນົດຈະແຈ້ງແຕ່ລະໜ້າວຽກ, ກຳນົດເວລາສຳເລັດແຕ່ລະໜ້າວຽກ, ການນຳໃຊ້ງົບປະມານຕໍ່ແຕ່ລະໜ້າວຽກ ບົນຈິດໃຈປະຢັດ ຕ້ານການຟຸມເຟືອຍ; ນອກຈາກນີ້, ຕ້ອງກຳ ນົດລະອຽດຈະແຈ້ງລະບອບປະຊຸມຂອງຄະນະກຳມະການລະດັບຊາດ, ຄະນະປະຈຳການ, ກອງເລຂາ ແລະ ອະນຸກຳມະການຕ່າງໆ, ລະບອບລາຍງານຂໍທິດຊີ້ນຳຈາກກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ແລະ ລະບອບທາບທາມຄວາມເຫັນຕໍ່ຮ່າງລັດຖະທຳມະນູນ. ສຳລັບກອງເລຂາ ແລະອະນຸກຳມະການຕ່າງໆ ໃຫ້ມີການແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນໃຫ້ລະອຽດຈະແຈ້ງ; ໃຫ້ມີຜູ້ປະຈຳການ, ຜູ້ປະສານງານ, ມີລະບອບເຮັດວຽກ, ລະບອບປະຊຸມ, ລະບອບລາຍງານຂໍທິດຊີ້ນຳຢ່າງຈະແຈ້ງ; ຈົ່ງຮີບຮ້ອນຜັນຂະຫຍາຍແຜນການ, ແຜນດຳເນີນງານເປັນແຜນວຽກຕົວຈິງຂອງຕົນເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ. ການແບ່ງງານພາຍໃນຄະນະກຳມະການລະດັບຊາດ, ຄະນະປະຈຳການນັ້ນ ຈົ່ງເອົາໃຈໃສ່ຍົກສູງຄວາມຮັບຜິດຊອບໃນວຽກງານປັບປຸງລັດຖະທຳມະນູນຕາມທີ່ໄດ້ແບ່ງງານ ເພື່ອພ້ອມກັນຈັດຕັ້ງປະຕິບັດແຜນການ, ແຜນດຳເນີນງານໃຫ້ສຳເລັດຕົວຈິງ. ສຳລັບຄາດໝາຍສູ້ຊົນລວມໃນການຈັດຕັ້ງປະຕິບັດແຜນການ ແລະ ແຜນດຳເນີນງານແຕ່ນີ້ຫາທ້າຍປີ 2024 ຈົ່ງພ້ອມກັນສູ້ຊົນຈັດຕັ້ງປະຕິບັດໃຫ້ສຳເລັດໂດຍພື້ນຖານການປັບປຸງລັດຖະທຳມະນູນ ແລະ ນຳເຂົ້າຂໍຄວາມເຫັນຈາກກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ສະໄໝທີ XI, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອທາບທາມຄວາມເຫັນ; ຫຼັງຈາກນັ້ນ, ສືບຕໍ່ປັບປຸງ ແລະ ນຳອອກທາບທາມຄວາມເຫັນຢ່າງກວ້າງຂວາງ (ເດືອນ 1-2 ປີ 2025) ແລ້ວສືບຕໍ່ປັບປຸງ ແລະ ນຳສະເໜີຂໍຄວາມເຫັນຕໍ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ສະໄໝທີ XI ກ່ອນຈະນຳສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ IX ເພື່ອພິຈາລະນາຮັບຮອງ.ຄາດຄະເນວ່າໃນກາງເດືອນກໍລະກົດ 2025 ໃຫ້ໄດ້ປະກາດໃຊ້ລັດຖະທຳມະນູນສະບັບປັບປຸງໃໝ່.

# ສະພາປະຊາຊົນແຂວງສາລະວັນ ປາຖະກະຖາ ວັນສຳຄັນ ແລະ ເຜີຍແຜ່ເອກະສານຕ່າງໆ



(ສພຊ)-ຕອນເຊົ້າຂອງວັນທີ 4 ມິຖຸນາ 2024 ທີ່ສະພາປະຊາຊົນແຂວງສາລະວັນ ໄດ້ຈັດພິທີປາຖະກະຖາວັນສຳຄັນ ແລະ ເຜີຍແຜ່ເຊື່ອມຊຶມເອກະສານຕ່າງໆ ເພື່ອສຶກສາອົບຮົມວຽກງານການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂອງຕົນ ໂດຍການເປັນປະທານຂອງທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງ; ມີຄະນະພັກຮາກຖານ, ຄະນະໜ່ວຍພັກ, ສະມາຊິກພັກ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ ຕະຫຼອດຮອດພະນັກງານ ພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນໂອກາດນີ້, ຜູ້ເຂົ້າຮ່ວມໄດ້ຮັບຟັງປາຖະກະຖາວັນສ້າງຕັ້ງກຳມະກອນສາກົນ ຄົບຮອບ 138 ປີ (1/5/1886-1/5/2024); ວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນທົ່ງໄຫຫີນຊຽງຂວາງ ຄົບຮອບ 65 ປີ(18/5/1959-18/5/2024); ວັນວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງຜູ້ນຳພັກ ແລະແນວລາວຮັກຊາດ ຄົບຮອບ 64 ປີ (24/5/1960-24/5/2024); ວັນເກີດທ່ານກາກ-ມາກ ຄົບຮອບ 206 ປີ (5/5/1818-5/5/2024);ວັນໄຊຊະນະຂອງສະຫະພາບໂຊວຽດ ເໜືອຟາສຊິດເຢຍລະມັນ ໃນສົງຄາມໂລກຄັ້ງທີ II ຄົບຮອບ 79 ປີ (9/5/1945-9/5/2024); ວັນໄຊຊະນະບັ້ນຣົບດຽນບຽນຟູ ຄົບຮອບ 70 ປີ (7/5/1954-7/5/2024); ວັນເກີດປະທານໂຮ່ຈີ່ມິງ ຄົບຮອບ 134 ປີ (19/5/1890-19/5/2024); ຮັບຟັງການເຜີຍແຜ່ເຊື່ອມຊຶມເອກະສານ ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງສາລະວັນເປີດກວ້າງຄັ້ງທີ 14 ສະໄໝທີ IX ແລະ ຜົນສຳເລັດຂອງກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2023 ເຊິ່ງຄະນະນຳສະພາໄດ້ຜັດປ່ຽນກັນບັນລະຍາຍ;

ທັງນີ້, ເພື່ອເຮັດໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບວັນທີ່ມີຄວາມໝາຍ ແລະ ຄວາມສຳຄັນທາງປະຫວັດສາດຂອງຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະກອນໃນທົ່ວໂລກ; ຮັບຮູ້ເຂົ້າໃຈ ປັດໄຈພື້ນຖານທີ່ເຮັດໃຫ້ການຜ່າວົງປິດລ້ອມຢ່າງມີໄຊຊະນະຢ່າງຍິ່ງໃຫຍ່ຂອງກອງພັນທີ 2 ວິລະຊົນທົ່ງໄຫຫີນຊຽງຂວາງ; ຮັບຮູ້ເຖິງເຫດການວິລະກຳຂອງຜູ້ນຳຂອງພັກ ແລະ ແນວລາວຮັກຊາດ ໃນການໂຕນຄຸກຄຸມຂັງທີ່ໜ້າມະຫັດສະຈັນ; ຮັບຮູ້ເຖິງຂໍ້ມູນປະຫວັດແຕ່ລະໄລຍະຂອງບຸກຄົນສຳຄັນທ່ານກາກມາກ ນັກເສດຖະສາດ, ປັດຊະຍາ, ນັກປະຕິວັດຜູ້ຍິ່ງໃຫຍ່ຂອງຊົນຊັ້ນກຳມະຊີບ ແລະ ຜູ້ນຳປະຕິວັດ ປະທານໂຮ່ຈີ່ມິງ; ຮັບຮູ້ເຖິງເຫດການທາງປະຫວັດສາດໃນໄລຍະສົງຄາມໂລກຄັ້ງທີ II ສະຕະວັດທີ XX ການຕໍ່ສູ້ຂອງສະຫະພາບໂຊວຽດທີ່ໄດ້ຮັບໄຊຊະນະອັນຍິ່ງໃຫຍ່ເໜືອຟາສຊິດເຢຍລະມັນ; ຮັບຮູ້ເຖິງເຫດການໄລຍະການຕໍ່ສູ້ຈົນເຖິງວັນໄຊຊະນະອັນຍິ່ງໃຫຍ່ບັ້ນຣົບດຽນບຽນຟູ ການຕໍ່ສູ້ຢ່າງພິລາດອາດຫານຮ່ວມສຳພັນສູ້ຮົບຂອງ 3 ຊາດອິນດູຈີນ ຄື: ຫວຽດນາມ, ລາວ ແລະ ກຳປູເຈຍ ຕໍ່ການຮຸກຮານຂອງພວກສັດຕູ; ກຳແໜ້ນຕໍ່ເນື້ອໃນຜົນສຳເລັດຂອງກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2023 ແລະ ເນື້ອໃນມະຕິຂອງກອງປະຊຸມຄົບຄະນະບໍລິຫານງານພັກແຂວງສາລະວັນ ເປີດກວ້າງ ຄັ້ງທີ 14 ສະໄໝທີ IX ເພື່ອຈັດຕັ້ງຜັນຂະຫຍາຍເຂົ້າສູ່ວຽກງານໃຫ້ເກີດຜົນເປັນຈິງ.

**(ຄີລຳພົນ ພົມມະຈັນ)**

# ຕິດຕາມກວດກາວຽກງານຂົງເຂດຍຸຕິທຳ ແລະ ປກຊ-ປກສ ທີ່ເມືອງໝອກ ແຂວງຊຽງຂວາງ



(ສພຊ) - ເພື່ອຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາ; ໃນລະຫວ່າງວັນທີ 4 ມິຖຸນາ 2024 ທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງຊຽງຂວາງ ພ້ອມດ້ວຍພະນັກງານສະພາປະຊາຊົນແຂວງ ໄດ້ລົງຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢູ່ເມືອງໝອກ ໂດຍການເຂົ້າຮ່ວມຂອງທ່ານ ພົອ. ມີສຸກ ຂັນທະຍົງທອງ ເລຂາພັກເມືອງ ເຈົ້າເມືອງໆໝອກ, ມີສະມາຊິກສະພາປະຊາຊົນແຂວງປະຈຳເມືອງໝອກ, ບັນທ່ານຫົວໜ້າ-ຮອງຫົວໜ້າ ແລະ ພະນັກງານທີ່ທີ່ຢູ່ໃນຂົງເຂດຍຸຕິທຳ ແລະ ປກຊ-ປກສ ເຂົ້າຮ່ວມ.

ການຕິດຕາມກວດກາໃນຄັ້ງນີ້, ທ່ານ ພົອ. ມີສຸກ ຂັນທະຍົງທອງ ໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂົງເຂດຍຸຕິທຳ ແລະ ປກຊ-ປກສ ຢູ່ເມືອງໝອກໃນໄລຍະຜ່ານມາ ໂດຍຫຍໍ້ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຂອງກອງບັນຊາການ ປກສ ແລະ ປກຊ, ຮັບຟັງບົດລາຍງານໂດຍຫຍໍ້ຂອງຫ້ອງການສະຫະພັນນັກຮົບເກົ່າເມືອງ, ຮັບຟັງບົດລາຍງານໂດຍຫຍໍ້ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງຫ້ອງການຍຸຕິທຳເມືອງ ແລະ ຮັບຟັງບົດລາຍງານໂດຍຫຍໍ້ກ່ຽວກັບວຽກງານປ້ອງກັນຊາຍແດນ ແລະ ແກ້ໄຂບັນຫາຢາເສບຕິດ ທີ່ລຽບຕາມຊາຍແດນໄລຍະຜ່ານມາ ເຊິ່ງຍົກໃຫ້ເຫັນເຖິງ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສະພາບຄວາມເປັນຈິງຂອງການເຄື່ອນໄຫວວຽກງານ, ພ້ອມນັ້ນຄະນະສະມາຊິກສະພາປະຊາຊົນແຂວງ ຍັງໄດ້ມີເຈາະຈີ້ມຄຳຖາມເຈາະຈີ້ມທີ່ກ່ຽວພັນກັບບັນດາຫ້ອງການຂອງເມືອງ ເປັນຕົ້ນແມ່ນການປະຕິບັດຄຳຕັດສິນຂອງສານ, ບັນຫາຢາເສບຕິດ, ການກວດສຸຂະພາບຂອງກຳລັງ, ການຄຸ້ມຄອງອາວຸດຕ່າງໆ, ການພົວພັນປະສານງານກັບພາກສ່ວນຕ່າງໆ, ແລະ ອື່ນໆ. ນອກນັ້ນ ບັນດາຜູ້ແທນກອງປະຊຸມໄດ້ມີຄຳສະເໜີຕໍ່ສະພາປະຊາຊົນແຂວງ ໃຫ້ຂັ້ນເທິງຄົ້ນຄວ້າ ແລະ ຂໍທິດຊີ້ນຳ ເພື່ອສະດວກໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ.

ທ່ານ ວຽງໄຊ ສີວິໄລ ຍັງໄດ້ຊີ້ນຳໃຫ້ຄະນະພັກ, ຄະນະນຳອົງການປົກຄອງເມືອງ ຈົ່ງຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ຖືກຕ້ອງແລະສອດຄ່ອງກັບສະພາບຄວາມເປັນຈິງ ບົນພື້ນຖານສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ສືບຕໍ່ປະຕິບັດສິດ ແລະ ໜ້າທີ່ຂອງຕົນ, ເອົາໃຈໃສ່ພົວພັນປະສານງານກັບຂະແໜງການທີ່ກ່ຽວຂ້ອງ ໃຫ້ຈອດກັນ ເພື່ອໃຫ້ສະດວກໃນການຈັດຕັ້ງປະຕິບັດວຽກງານ.

**(ນາງ ສຸກສະຫວັນ ອິນທະແສງ)**

# ສພຂ ອັດຕະປື ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂົງເຂດເສດຖະກິດ, ແຜນການ ແລະ ການເງິນ

(ສພຊ) - ເພື່ອເກັບກຳໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ທີ່ສະພາໄດ້ຮັບຮອງ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ສາມາດດຳເນີນໄປຢ່າງມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ ສາມາດກວດສອບໄດ້ ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX; ໃນວັນທີ 3 ມິຖຸນາ 2024 ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດກອງປະຊຸມຕິດຕາມກວດກາ ແລະ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດວຽກງານໃນຂົງເຂດເສດຖະກິດ, ແຜນການ ແລະ ການເງິນ ມີຂຶ້ນທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານ ສພຂ ອັດຕະປື; ເຂົ້າຮ່ວມມີທ່ານ ຄຳຫວັນ ຈັນທະໂຄດ ຄະນະປະຈຳພັກແຂວງ, ປະທານກວດກາພັກ-ລັດ, ມີທ່ານປະທານຄະນະກຳມະການເສດຖະກິດ,ແຜນການ ແລະ ການເງິນ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ຫົວໜ້າ-ຮອງຫົວໜ້າພະແນກການ, ຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.



ກອງປະຊຸມໄດ້ຮັບຟັງການລາຍງານຈາກຂະແໜງການທີ່ກ່ຽວກັບສະພາບຂໍ້ສະດວກຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານຮອບດ້ານ ຕິດພັດກັບການຈັດຕັ້ງປະຕິບັດມະຕິທີ່ ສພຂ ຮັບຮອງ ເປັນຕົ້ນແມ່ນການໃຊ້ບ້ວງເງິນບໍລິຈາກ ແລະ ເງິນຊົດເຊີຍຜົນກະທົບ ຢູ່ເມືອງສະໜາມໄຊ, ການແຕ່ງຕັ້ງຄະນະລົງເຄື່ອນໄຫວຕິດຕາມກວດກາທີ່ອົງການກວດກາລັດແຂວງແຕ່ງຕັ້ງ, ກົນໄກການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ, ແຂວງ ແລະ ເມືອງ ໃນການອະນຸຍາດການລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດ, ຄວາມຄືບໜ້າການເກັບກູ້ໜີ້ສິນແກ່ຍາວ, ຄຸມເຄືອ, ການສົ່ງເສີມດ້ານການຜະລິດ (ປູກຝັງ, ລ້ຽງສັດ) ໃຫ້ພໍ່ແມ່ປະຊາຊົນທີ່ນອນໃນເຂດໂຄງການສຳປະທານ, ການຟື້ນຟູ ແລະ ຈັດສັນ 3 ປະເພດປ່າ ລວມທັງການຟື້ນຟູປ່າໄມ້ຄືນໃໝ່ຕາມແຄ້ມນ້ຳເຊປຽນທີ່ໄດ້ຮັບຜົນກະທົບ, ການຈັດຕັ້ງປະຕິບັດໄດ້ດີ ແລະ ບໍ່ສາມາດໄດ້ຕາມແຜນຕໍ່ວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ດ້ານການສະກັດກັ້ນການລັກລອບຂຸດຄົ້ນຊັບພະຍາກອນແຮ່ຄຳຕຶກຂ້ອນ, ການຄຸ້ມຄອງໂຄງການແຮ່ທາດ ແລະ ໄຟຟ້າ, ການຄຸ້ມຄອງກອງທຶນ SME, ການຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ, ການອອກສຳມະໂນຕາດິນ ແລະ ອອກໃບຕາດິນຖາວອນ, ການບຸກເບີກເນື້ອທີ່ດິນເກີນຂອບເຂດທີ່ໄດ້ຮັບອະນຸຍາດຈາກພາກລັດໃຫ້ບໍລິສັດເຊົ່າສຳປະທານທີ່ດິນ, ການຄຸ້ມຄອງລົດຂົນສົ່ງສິນຄ້າທີ່ບັນທຸກສິນຄ້າເກີນມາດຖານ, ການຄຸ້ມຄອງສື່ສັງຄົມອອນລາຍ, ທິດທາງຕອບສະໜອງແກ່ການຊົມໃຊ້ເຄືອຂ່າຍໂທລະຄົມເຂດຊົນນະບົດຫ່າງໄກສອກຫຼີກໃນບາງເຂດທີ່ບໍ່ມີສັນຍານ ແລະ ບັນຫາອື່ນໆ.

ຈາກນັ້ນ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມສຸມໃສ່ແລກປ່ຽນ, ປະກອບຄຳເຫັນ ຊອກຫາສາເຫດ ແລະ ສະເໜີວິທີແກ້ໄຂຢ່າງເໝາະສົມ ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດຢ່າງເຂັ້ມງວດ.

**(ວິນັດ ສີສຸລາດ)**




# ທວນຄືນບາງແນວຄິດ ໄກສອນ ພົມວິຫານ ກ່ຽວກັບການສ້າງເສດຖະກິດ

# ດົ້ນກົບເມກ

ຜູ້ຂຽນມີຈຸດປະສົງຄັດຈ້ອນເອົາບາງແນວຄິດຂອງທ່ານປະທານ ໄກສອນ ພົມວິຫານ ທີ່ເພິ່ນໄດ້ມີຄຳເຫັນໄວ້ໃນກອງປະຊຸມ ແລະ ເອກະສານຕ່າງໆ ໂດຍສະເພາະແມ່ນຖືກລວມພິມໄວ້ໃນໜັງສືນິພົນເລືອກເຟັ້ນຂອງເພິ່ນເຊັ່ນ: ຢູ່ໃນຫົວທີສາມ ໜ້າ 327-365 ເພິ່ນໄດ້ຂຽນວ່າ: ໃນລະບອບປະຊາທິປະໄຕປະຊາຊົນ ແມ່ນມີຫຼາຍກຳມະສິດຂອງຊົນຊັ້ນ ແລະ ຊັ້ນຄົນຕ່າງໆ ເຊັ່ນ: ກຳມະກອນ, ກະສິກອນ, ເຈົ້າຊັບນ້ອຍ, ຊ່າງຫັດຖະກຳ, ພໍ່ຄ້າຊາວຂາຍ, ນາຍທຶນແຫ່ງຊາດ, ປັນຍາຊົນຜູ້ຊົງຄຸນນະວຸດ... ອີງໃສ່ທັດສະນະຂ້າງເທິງນັ້ນ ການປະຕິບັດນະໂຍບາຍເສດຖະກິດຫຼາຍພາກສ່ວນ ແມ່ນແນໃສ່ຍູ້ແຮງກຳລັງການຜະລິດໃຫ້ຂະຫຍາຍຕົວ, ຮັບຮູ້ພື້ນຖານເສດຖະກິດສິນຄ້າມີຫຼາຍຮູບການກຳມະສິດ...

ການຫັນໄປສູ່ເສດຖະກິດສິນຄ້າ ແມ່ນກົດເກນຕ້ອງເປັນໄປຂອງເສດຖະກິດສັງຄົມນິຍົມ, ທາດແທ້ຂອງເສດຖະກິດສັງຄົມນິຍົມແມ່ນຕ້ອງໄດ້ຄຸ້ມຄອງຕາມຫຼັກການລວມສູນປະຊາທິປະໄຕ ໝາຍຄວາມວ່າ ຄຸ້ມຄອງລວມສູນບົນພື້ນຖານປະຕິບັດລະບອບຄຸ້ມຄອງດ້ວຍຕົນເອງ ບັນດາຫົວໜ່ວຍ ແລະ ການຈັດຕັ້ງເສດຖະກິດຮາກຖານຢ່າງຄົບຖ້ວນ, ປະຕິບັດສິດປະຊາທິປະໄຕຂອງປະຊາຊົນບັນດາເຜົ່າຢ່າງຄົບຖ້ວນ, ເມື່ອເວົ້າເຖິງກົນໄກໄລ່ລຽງທຸລະກິດ, ກົນໄກໃໝ່ ຫົວໜ່ວຍເສດຖະກິດຕ້ອງຮັບຜິດຊອບເອງ ແລະ ຮັບປະກັນ ໃຫ້ແກ່ການເຄື່ອນໄຫວຂອງຕົນ, ກົນໄກໃໝ່ໃຊ້ວິທີເສດຖະກິດເປັນຕົ້ນຕໍ ສົມທົບກັບວິທີການບໍລິຫານ ແລະ ວິທີສຶກສາອົບຮົມ ເພື່ອຄຸ້ມຄອງເສດຖະກິດ.

ກົນໄກໃໝ່ຈຳແນກຢ່າງຈະແຈ້ງ ແລະ ສົມທົບຢ່າງຖືກຕ້ອງ ລະຫວ່າງສອງພາລະບົດບາດ ຄຸ້ມຄອງເສດຖະກິດ ແລະ ຄຸ້ມຄອງທຸລະກິດ, ອົງການຕ່າງໆຂອງລັດ ບໍ່ໃຫ້ແຊກແຊງເຂົ້າໃນການ ເຄື່ອນໄຫວທຸລະກິດ ພຽງແຕ່ໃຫ້ໃຊ້ເຄື່ອງມື ເຊັ່ນ: ຍຸດທະສາດ, ແຜນການ, ນະໂຍບາຍ, ກົດໝາຍບັນຊາທຸລະກິດ, ກວດກາທຸລະກິດ ບັນດາຫົວໜ່ວຍເສດຖະກິດ ເປັນເຈົ້າການໃນການເຄື່ອນໄຫວ, ຊື້-ຂາຍ, ຂາອອກ-ຂາເຂົ້າ, ຮັບປະກັນຕອບສະໜອງຄວາມຕ້ອງການຂອງສັງຄົມໃຫ້ດີ ແລະ ທຸລະກິດໃຫ້ມີຜົນກຳໄລ... (ນິພົນເລືອກເຟັ້ນ, ຫົວທີສອງ, ໜ້າທີ 304-305), ກົນໄກຄຸ້ມຄອງໃໝ່ ຕ້ອງຮັບປະກັນການນຳໃຊ້ຄວາມກ້າວໜ້າ ທາງດ້ານວິທະຍາສາດ-ເຕັກນິກ ເຂົ້າສູ່ການຜະລິດ ເພາະມັນແມ່ນໄມ້ງັດເສດຖະກິດໃຫ້ຂະຫຍາຍຕົວ...

ສັງລວມໄດ້ວ່າ: ຜູ້ຂຽນພຽງຄັດຈ້ອນເອົາບາງຄຳເຫັນດ້ານເສດຖະກິດຂອງທ່ານປະທານໄກສອນ ພົມວິຫານ ເພື່ອສະເໜີແລກປ່ຽນ ທົບທວນທິດສະດີ ແລະ ພຶດຕິກຳຕົວຈິງນໍ !.








# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ຖ້າຢາກຕ້ານຢັນພະຍາດອາດຍາ, ພະຍາດຢູ່ແຕ່ຫ້ອງການ ແລະ ຢາກຮູ້ວ່າມະຕິຕົກລົງ ແລະ ຄຳສັ່ງຕ່າງໆໄດ້ຮັບການປະຕິບັດຖືກຕ້ອງ ຫຼື ບໍ່, ແມ່ນຜູ້ໃດອອກແຮງເຮັດ, ຜູ້ໃດເຮັດພໍແລ້ວເລື່ອງ, ດັ່ງນັ້ນ ກໍມີແຕ່ວິທີດຽວຄື: ຊ່າງກວດເບິ່ງໃຫ້ຄັກ, ຖ້າຫາກກວດກາຫາກດີນັ້ນ ຂໍ້ບົກພ່ອງມີທີ່ໃດ ຫາກຈະພົ້ນຂຶ້ນມາໃຫ້ເຫັນໝົດ. ຖ້າການກວດກາຫາກດີນັ້ນ ຂໍ້ບົກພ່ອງທີ່ມີນັ້ນ ພາຍຫຼັງໄປ ເດັດຂາດຈະຫຼຸດຜ່ອນລົງ. ແຕ່ວ່າຢາກໃຫ້ການກວດກາເຮັດໄດ້ດີນັ້ນ ຕ້ອງມີວຽກທີ່ຈະຕ້ອງເຮັດຢູ່ສອງຂໍ້ຄື: ຂໍ້ທີ່ໜຶ່ງ, ແມ່ນການກວດ ກາຕ້ອງມີສາຍໄຍຈັດຕັ້ງ ແລະ ຕ້ອງເຮັດເປັນປົກກະຕິ. ຂໍ້ທີ່ສອງ, ແມ່ນຄົນຜູ້ໄປກວດການັ້ນຕ້ອງແມ່ນຄົນຜູ້ທີ່ມີອິດທິພົນຊື່ສຽງດີ, ມີຄວາມສາມາດ.

ການກວດກາຕ້ອງເຮັດວິທີໃດ ? ຄວາມຈິງບໍ່ແມ່ນວ່າຈະນັ່ງຢູ່ໃນຫ້ອງການ ຄອຍຖ້າແຕ່ຄົນອື່ນລາຍງານມາໃຫ້ດັ່ງນັ້ນດອກ; ຕົນເອງຕ້ອງລົງໄປເຖິງບ່ອນ, ເບິ່ງເຖິງວຽກແຕ່ລະອັນດ້ວຍຕາຂອງຕົນເອງ.

ອ່ານຕໍ່ສະບັບໜ້າ...




# ເສີຍເມີຍ - ເມີນເສີຍ

ເສີຍເມີຍ ແລະ ເມີນເສີຍ ເປັນສອງຄຳທີ່ມີຄວາມໝາຍໃກ້ຄຽງ ເຊິ່ງມີຄວາມຄື ແລະ ຕ່າງກັນດັ່ງນີ້:

'ເສີຍເມີຍ' ເປັນຄຳຊ້ອນ ເພື່ອສຽງທີ່ເກີດຈາກການນຳເອົາຄຳທີ່ມີພະຍັນຊະນະແກນຕ່າງກັນ 'ສ' ແລະ 'ມ' ແຕ່ສຽງສະຫຼະ ແລະ ຕົວສະກົດຄືກັນ 'ເີຍ' ມາຊ້ອນໃສ່ກັນ ເພື່ອໃຫ້ອອກສຽງງ່າຍ ແລະ ເກີດສຽງສຳຜັດກັນ. 'ເສີຍເມີຍ' ເປັນປະເພດຄຳກິລິຍາ ໝາຍເຖິງ "ບໍ່ເອົາໃຈໃສ່, ລະເລີຍ, ບໍ່ຫ່ວງໄຍ, ບໍ່ສົນບໍ່ກ່ຽວນຳ" ເຊັ່ນ

- ຜູ້ໃດຫາກເສີຍເມີຍຕໍ່ການຮໍ່າຮຽນ ກໍຈະເຮັດໃຫ້ຊີວິດບໍ່ມີຄວາມກ້າວໜ້າ.
- ຍ້ອນມີຄົນຮັກໃໝ່ ນາງຈຶ່ງເສີຍເມີຍຕໍ່ເຂົາ.
- ພາຍຫຼັງລາວຖືກຕຳໜິຢ່າງແຮງ ລາວກໍມີທ່າທີເສີຍເມີຍຕໍ່ໝູ່ຄູ່.

'ເມີນເສີຍ' ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ 'ເມີນ' ທີ່ໝາຍເຖິງ "ເບືອນໜ້າໜີ, ບໍ່ຫຼຽວ, ບໍ່ແລ" ແລະ 'ເສີຍ' ໝາຍເຖິງ "ບໍ່ເອົາຫົວຊາ, ບໍ່ເອົາໃຈໃສ່, ບໍ່ສະແດງຄວາມຮູ້ສຶກ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ເມີນເສີຍ' ກໍໝາຍເຖິງ "ບໍ່ສົນໃຈໄຍດີ, ສະແດງອາການບໍ່ໃສ່ໃຈຕໍ່ສິ່ງຫຼືເຫດການທີ່ປະສົບພົບພໍ້" ເຊັ່ນ

- ບໍ່ຄວນເມີນເສີຍຕໍ່ປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມຊຸ່ມື້ນີ້.
- ຄັນຫົວໜ້າຍັງເມີນເສີຍຢູ່ບັນຫານີ້ກໍຄົງຈະເພີ່ມຄວາມສະຫຼັບຊັບຊ້ອນຫຼາຍຂຶ້ນ.
- ພວກເຮົາບໍ່ຄວນເມີນເສີຍຕໍ່ສະພາບການທີ່ເກີດຂຶ້ນໃນຄັ້ງນີ້ ຕ້ອງເອົາໃຈໃສ່ແກ້ໄຂບັນຫາໃຫ້ໄດ້.

**# ຂໍ້ສັງເກດ:** ສອງຄຳນີ້ມີຄວາມໝາຍຄ້າຍຄືກັນ ແຕ່ເວລາໃຊ້ 'ເມີນເສີຍ' ຈະມີຄວາມໝາຍໜັກກວ່າ 'ເສີຍເມີຍ'



# ຂຽນຄໍາລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ອັກເສບ | ອັບເສບ |
| ພ່າຍແພ້ | ຜ່າຍແຜ້ |
| ທີ່ຢູ່ອາໄສ | ທີ່ຢູ່ອາໄສ |
| ເຍາະເຍົ່າ | ເຍາະເຫຍົ່າ |
| ອຸນຫະພູມ | ອຸນນະພູມ |
| ລັດຖະສາດ | ລັດທະສາດ |
| ເຄື່ອງອາໄຫຼ່ | ເຄື່ອງອາໄລ່ |
| ສະໜິດສະໜົມ | ສະນິດສະນົມ |
| ຫົວສໍ່າໝາກກອກ | ຫົວຊໍ່າໝາກກອກ |



## ສຸກສະບາຍທາຍໂລດ

# ອາໂວກາໂດ ຊ່ວຍໃຫ້ມົດລູກແຂງແຮງ

ໂດຍ: ທິວກະທິ



ກິນໝາກອາໂວຄາໂດອາທິດລະໜ່ວຍ ຈະເຮັດໃຫ້ມົດລູກແຂງແຮງ ແລະ ປະຈຳເດືອນມາປົກກະຕິ ຊ່ວງເວລາທີ່ໃກ້ຈະເປັນປະຈຳເດືອນ ເປັນຊ່ວງທີ່ສາວໆຕ້ອງລະວັງເລື່ອງອາຫານເປັນພິເສດ ເພື່ອໃຫ້ມົດລູກມີສຸຂະພາບທີ່ດີ ໂດຍແນະນຳໃຫ້ກິນອາຫານທີ່ຊ່ວຍຂັບສານພິດ ແລະ ເຮັດໃຫ້ປະຈຳເດືອນມາເປັນປົກກະຕິ.

ໝາກອະໂວກາໂດ ມີຂະໜາດຂ້ອນຂ້າງໃຫຍ່ ມີເນື້ອເປັນສີເຫຼືອງຂຽວ ລັກສະນະເປັນຄຣີມ ອຸດົມດ້ວຍສານອາຫານຫຼາຍຢ່າງ ມີທັງວິຕາມິນຊີ, ອີ, ດີ ແລະ ກົດໄຂມັນໂອເມກ້າ 3 ທີ່ຊ່ວຍໃນເລື່ອງຜິວ, ບຳລຸງເລັບ ແລະ ແຂ້ວ ລວມທັງບຳລຸງເສັ້ນຜົມທີ່ແຫ້ງແຕກປາຍ ໃຫ້ກັບມາມີສຸຂະພາບດີອີກຄັ້ງ.

ໄດ້ມີການວິໄຈພົບວ່າ ຜູ້ຍິງທີ່ກິນອະໂວກາໂດ 1 ໜ່ວຍໃນທຸກອາທິດ ຈະມີປະລິມານໂຮໂມນທີ່ສົມດູນກວ່າຜູ້ຍິງທີ່ບໍ່ກິນ ເຮັດໃຫ້ປະຈຳເດືອນມາປົກກະຕິ ແລະ ມົດລູກແຂງແຮງ.

**ຂໍ້ມູນຈາກ:**
**www.laopost.com**



## ອາດກະວີລາວ

# ຍຸງຮ້າຍກວ່າເສືອ

**# ແກ້ວຕາວັນ ທຳມະວົງ**

✻ ຊຸມເສືອສິງຊາດເຊື້ອ
ຄອຍຄຸບກວາງຟານໝູ
ບໍ່ເຫັນມັນມາຄົ້ນ
ກຸມກັດກິນຈົກຫຍໍ້າ

ໃນປ່າພະນາໄພ
ໝູ່ກະທິງກິນຊີ້ນ
ຄໍຄືນຄອຍຄາບ
ໃນຮ້ານຮົ່ມເຮືອນ

✻ ເສືອທີ່ມັນໂຫດຮ້າຍ
ພາກັນກົວມັນດົງ
ຄືດັ່ງເດຍລະສານເຊື້ອ
ບໍ່ເຄີຍມາຈອບຈ້ອງ

ຄາງຊູ່ຄືນເຮົາ
ລາກຄໍໄປຂ້າ
ເນົາໃນດົງປ່າ
ປອງຂ້າໝູ່ເຮົາ

✻ ຍຸງລາຍໂຕທໍ່ຮົ້ນ
ຄືນບໍ່ເຄີຍສິງໄສ
ແຕ່ຕົວຈິງເຄີຍຂ້າ
ກາງຄືນຍັງເວີ່ນເຂົ້າ

ໄຮເຮືອດເຮືອນເຮົາ
ວ່າເປັນໄພຮ້າຍ
ຄືນມາຫລາຍໝື່ນ
ໃນມຸ້ງດູດກິນ

✻ ເສືອອາໄສຢູ່ຖ້ຳ
ຫ່າງໄກພູມລຳເນົາ
ເຖິງຈະມີໄພຮ້າຍ
ມັນບໍ່ມາຊອກໝິ້ນ

ດອຍປ່າພະນາໄພ
ຖິ່ນເຮົາເຊົາຊິ້ນ
ອັນຕະລາຍແຮງໂຫດ
ກຸມຂ້າຄາບຄໍ ດອກນາ!

✻ ແຕ່ວ່າຍຸງຍັກຮ້າຍ
ລີ້ຊ່ອນແຝງຕົວມາ
ອາໄສນອນໃນບ້ານ
ເວັນແລະຄືນວີ່ເຂົ້າ

ຊິນຊອກຊາວຫາ
ຄາດຕະກຳຄືນໄດ້
ແຄມເຮືອນເຮົາຢູ່
ປະຊັນຂ້າຈູ່ໂຈມ

✻ ຍຸງຫລືເສືອທີ່ແທ້
ເປັນຕົວການດູດກິນ
ຍຸງຫລືເສືອເຮົາຕ້ອງ
ດັບສູນພັນບໍ່ໃຫ້

ໃຈໂຫດສາມານ
ເລືອດປະຊາຊາວເຊື້ອ
ລົງມືປາມປາບ
ມັນໄດ້ສືບແນວ ນັ້ນນໍ!






## ຟ້າຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✻ **ກອງ**ປະຊຸມສະໄໝສາມັນ**ເທື່ອທີ 7** ຂອງສະພາແຫ່ງຊາດ ຊຸດທີ **IX** ພວມດຳເນີນໄປຢ່າງເຂັ້ມຂຸ້ນປານປາງບຸນ ເພາະຢູ່ໃນໄລຍະປະກອບຄຳຄິດຄຳເຫັນໃສ່ບົດ**ລາຍງານຂອງລັດຖະບານ** ບັນຍາກາດຄຶກຄື້ນ ຄຳເຫັນຫຼັ່ງໄຫຼມາ ມີຫຼາກຫຼາຍບັນຫາ ເຫດການເພື່ອກຽມແກ້ຕັ້ງແຕ່ເໜືອເຖິງໃຕ້ **ສສຊ** ປະກອບໃສ່ ປະເດັນໃຫຍ່ກໍ່ແມ່ນເລື້ອງ ເງິນກີບເຟີ້ອອນແຮງ **ນັ້ນແລ້ວ!**

✻ **5-9** ມິຖຸນາຜ່ານມາ ທີ່ຫໍວັດທະນະທຳແຫ່ງຊາດ ໄດ້ມີການປະກາດສະເຫຼີມສະຫຼອງທັດຖະກຳຕ່ຳຫູກ**ລາຍນາກ**ເປັນ**ມໍລະດົກໂລກ** ຫຼັງຈາກທີ່ອົງການຢູແນັດສະໂກຮັບຮອງໃນ**ທ້າຍປີ 2023** ຜ່ານມາ ປວງປະຊາເອກອ້າງເອກະລັກຄວາມເປັນລາວ ສູ່ສາຍຕາໂລກາ ວ່າຊາດລາວຈະເລີນອ້າງ ທັງຄົນທັງສືບຜ້າ ວັດວາສະຖານທີ່ ມີດີໜ້າຍົກຍ້ອງ ຊ່ເຊີນຢື້ຢ່ອງຢາມ **ແດ່ເນີ!**

## ຊວນຍິ້ມ

*# ແອ່ນຕຸ້ງ*

### ເລື່ອງ: ລົ່ງໄປທີ່ທີ່ມັກເດີ

ຫຼັງຈາກພິທີຊາປະນະກິດສົບຂອງເຈົ້ານາຍ ສາວໃຊ້ໄດ້ມາຄອບອອກຽກກັບມາດາມ

**ມາດາມ:** ເປັນຫຍັງຈຶ່ງຊິອອກ?
**ສາວໃຊ້:** ຂ້ອຍຢ້ານ
**ມາດາມ:** ເຈົ້າຢ້ານຫຍັງ?
**ສາວໃຊ້:** ຂ້ອຍເຫັນເຈົ້າຢາດບ້ານແລ້ວບອກວ່າ ໄປຢູ່ທີ່ທີ່ເຈົ້າມັກ ເຈົ້າຄອບຢູ່ ແລະ ຢູ່ບ່ອນທີ່ເຈົ້າສະບາຍໃຈເດີ.
**ມາດາມ:** ແລ້ວມັນເປັນຕາຢ້ານບ່ອນໃດ?
**ສາວໃຊ້:** ກະບ່ອນທີ່ລາວມັກຢູ່ ແລະ ບ່ອນທີ່ລາວສະບາຍໃຈຄືຫ້ອງຂ້ອຍ.
**ມາດາມ:** !!!!!



## ຄະຕິເຕືອນໃຈ

*#ດອກຫຍ້າ*

ຕ່າງຄົນ ຕ່າງຄວາມຄິດ
ຈະເອົ້າຈະເຮັດສິ່ງໃດ
ຄອບພິຈາລະນາ

ລັດຖະສະພາຕ່າງປະເທດ

## ປະທານາທິບໍດີໂຕໂກ ປະກາດໃຊ້ ລັດຖະທຳມະນູນໃໝ່ສຳລັບລະບົບລັດຖະສະພາ

ຕາມຖະແຫຼງການຂອງປະທານາທິບໍດີເມື່ອຕົ້ນເດືອນພຶດສະພາຜ່ານມາ, ທ່ານ ໂຟເຣ ຍັດຊິງເບ (Faure Gnassingbé) ປະທານາທິບໍດີ ແຫ່ງ ສ.ໂຕໂກ ໄດ້ປະກາດໃຊ້ລັດຖະທຳມະນູນສະບັບປັບປຸງໃໝ່ ໂດຍປ່ຽນສາທາລະນະລັດໂຕໂກຈາກລະບົບປະທານາທິບໍດີ ເປັນລະບົບລັດຖະສະພາຢ່າງເປັນທາງການ.

ວັນທີ 19 ເມສາ 2024 ສະພາແຫ່ງຊາດໂຕໂກ ໄດ້ຜ່ານການພິຈາລະນາລັດຖະທຳມະນູນສະບັບປັບປຸງໃໝ່ຄັ້ງທີ 2; ພາຍໃຕ້ລັດຖະທຳມະນູນ, ປະທານາທິບໍດີໄດ້ຮັບການເລືອກຕັ້ງຈາກສະພາແຫ່ງຊາດ ໂດຍມີພາລະບົດບາດໃນດ້ານພິທີການເປັນສ່ວນໃຫຍ່, ມີອາຍຸການ 4 ປີ ດຳລົງຕຳແໜ່ງບໍ່ເກີນສອງສະໄໝ.

ນອກຈາກນັ້ນ, ລັດຖະທຳມະນູນສະບັບໃໝ່ ຍັງໄດ້ສະເໜີຕຳແໜ່ງ "ປະທານສະພາລັດຖະມົນຕີ" (President of the Council of Ministers) ທີ່ຈະດຳລົງຕຳແໜ່ງໂດຍຫົວໜ້າພັກການເມືອງ ຫຼື ພັນທະມິດທີ່ມີສຽງສ່ວນຫຼາຍໃນສະພາແຫ່ງຊາດ, ອາຍຸການ 6 ປີ ເຊິ່ງມີອຳນາດຢ່າງຫຼວງຫຼາຍໃນການບໍລິຫານ-ຄຸ້ມຄອງວຽກງານຂອງລັດຖະບານ ແລະ ມີຄວາມຮັບຜິດຊອບຕໍ່ສະພາແຫ່ງຊາດ.

ໃນປີ 2022 ໂຕໂກ ໄດ້ປັບປຸງລັດຖະທຳມະນູນຂອງຕົນເພື່ອໃຫ້ມີລະບົບສະພາຄູ່ (bicameral) ປະກອບດ້ວຍສະພາແຫ່ງຊາດ ແລະ ສະພາສູງ; ເຖິງແນວໃດກໍຕາມ, ສະພາສູງຍັງບໍ່ທັນໄດ້ຮັບການສ້າງຕັ້ງຂຶ້ນ.

ພາຍຫຼັງການເລືອກຕັ້ງສະພານິຕິບັນຍັດໃນປັດຈຸບັນ, ໂຕໂກ ຈະສາມາດສ້າງຕັ້ງສະພາສູງເປັນເທື່ອທຳອິດ; ສະມາຊິກສະພາສູງ ແລະ ສະມາຊິກສະພາແຫ່ງຊາດມີວາລະດຳລົງຕຳແໜ່ງ 6 ປີ ເຊິ່ງສາມາດຕໍ່ອາຍຸການໄດ້ສອງສະໄໝ.

ລັດຖະທຳມະນູນສະບັບໃໝ່ຍັງບໍ່ທັນໄດ້ປະກາດໃຊ້ຢ່າງເປັນທາງການ ໂດຍຢູ່ລະຫວ່າງລໍຖ້າການລົງນາມຂອງປະທານາທິບໍດີ ໂຟເຣ ຍັດຊິງເບ.

**ແຫຼ່ງຂ່າວ: ຊິນຮວາ**



## ກົດໝາຍຄ້ຳປະກັນສະບຽງອາຫານຂອງຈີນ ມີຜົນບັງຄັບໃຊ້ ແນໃສ່ກຸ້ມຕົນເອງຢ່າງແທ້ຈິງ



*ກົດໝາຍຄ້ຳປະກັນສະບຽງອາຫານສະບັບໃໝ່ຂອງຈີນ ມີຜົນບັງຄັບໃຊ້ແລ້ວເລີ່ມແຕ່ວັນທີ 1 ມິຖຸນາ 2024ເປັນຕົ້ນໄປ, ມີເປົ້າໝາຍເພື່ອຊຸກຍູ້ການກຸ້ມຕົນເອງຢ່າງແທ້ຈິງທາງດ້ານການສະໜອງທັນຍະພືດ ເພື່ອໃຫ້ຈີນຫຼຸດຜ່ອນການນຳເຂົ້າຜະລິດຕະພັນກະສິກຳຈາກຕ່າງປະເທດ.*

ກົດໝາຍຄ້ຳປະກັນສະບຽງອາຫານສະບັບທຳອິດຂອງຈີນ ແນໃສ່ບັນລຸ "ການກຸ້ມຕົນເອງຢ່າງແທ້ຈິງ" (absolute self-sufficiency) ທາງດ້ານທັນຍະພືດຕົ້ນຕໍ ໄດ້ມີຜົນບັງຄັບໃຊ້ໃນວັນເສົາທີ 1 ມິຖຸນາຜ່ານມາ, ເສີມຂະຫຍາຍຄວາມພະຍາຍາມຂອງພາກລັດ ເພື່ອຫຼຸດຜ່ອນການເພິ່ງພາການນຳເຂົ້າຈາກຕ່າງປະເທດ ໃນຖານະເປັນປະເທດທີ່ນຳເຂົ້າສິນຄ້າກະສິກຳລາຍໃຫຍ່ທີ່ສຸດຂອງໂລກ.

ກົດໝາຍດັ່ງກ່າວກຳນົດໂຄງສ້າງທາງດ້ານກົດໝາຍຕາມແນວທາງຂອງພັກກອມມູນິດຈີນ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ແລະ ອຸດສາຫະກຳກະສິກຳ ສາມາດເພີ່ມການຜະລິດສະບຽງອາຫານໄດ້, ແຕ່ຮ່າງກົດໝາຍສະບັບນີ້ ຍັງບໍ່ທັນມີລາຍລະອຽດກ່ຽວກັບມາດຕະການຈັດຕັ້ງປະຕິບັດ; ເຖິງແນວໃດກໍຕາມ, ກົດໝາຍໄດ້ກວມເອົາການປົກປ້ອງເນື້ອທີ່ດິນກະສິກຳ ຈາກການປ່ຽນໄປນຳໃຊ້ໃນທາງອື່ນ, ປົກປ້ອງຊັບພະຍາກອນພັນທຸກຳ (germplasm) ແລະ ການປ້ອງກັນການເສຍຫາຍ.

ການປະກາດໃຊ້ກົດໝາຍຄ້ຳປະກັນສະບຽງອາຫານ, ສະທ້ອນໃຫ້ເຫັນເຖິງຄວາມຮີບດ່ວນໃນການແກ້ໄຂບັນຫາທີ່ສົ່ງຜົນກະທົບຕໍ່ການຜະລິດ ເຊັ່ນ: ການຂາດແຄນທີ່ດິນ ແລະ ຊັບພະຍາກອນນ້ຳ ທີ່ເໝາະສົມກັບການປູກຝັງ, ການຂາດເຂີນແຮງງານ ແລະ ຂາດເຕັກໂນໂລຊີກະສິກຳ.

ກົດໝາຍດັ່ງກ່າວ ໄດ້ກຳນົດໃຫ້ລັດຖະບານສູນກາງ ແລະ ອົງການປົກຄອງແຂວງ ມີຄວາມຮັບຜິດຊອບໃນການລວມເອົາການຄ້ຳປະກັນດ້ານສະບຽງອາຫານ ເຂົ້າຢູ່ໃນແຜນເສດຖະກິດ ແລະ ການພັດທະນາຂອງຕົນ ເພື່ອຮັບປະກັນວ່າ ການສະໜອງສະບຽງອາຫານຍັງເປັນບຸລິມະສິດສູງສຸດໃນປະເທດທີ່ເຄີຍມີປະຫວັດປະສົບກັບຄວາມອຶດຫິວອັນເຈັບປວດ.

ຕາມຂໍ້ກຳນົດໃນກົດໝາຍ, ພັກກອມມູນິດຈີນ ຈະເປັນຜູ້ນຳພາໃນການຈັດຕັ້ງປະຕິບັດຍຸດທະສາດຄ້ຳປະກັນສະບຽງອາຫານແຫ່ງຊາດ "ທີ່ໃຫ້ຄວາມສຳຄັນຕໍ່ປະຊາກອນຂອງປະເທດເປັນອັນດັບໜຶ່ງ" (that puts China first) ການນຳເຂົ້າແມ່ນຢູ່ໃນລະດັບປານກາງເທົ່ານັ້ນ ແລະ ນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຊຸກຍູ້ການຜະລິດ.

ໜ່ວຍງານທີ່ລະເມີດກົດໝາຍ ອາດຈະຖືກປັບໃໝຕັ້ງແຕ່ 20,000 ຢວນ (1 ຢວນ ປະມານ 3,335 ກີບ) ຫາ 2 ລ້ານຢວນ, ໃນຂະນະທີ່ຜູ້ກະທຳຜິດສ່ວນບຸກຄົນ ອາດຈະຖືກປັບໃໝລະຫວ່າງ 20,000-200,000 ຢວນ.

**ແຫຼ່ງຂ່າວ: REUTERS**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ການ 6 ເດືອນທ້າຍປີ 2024; ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ກໍປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານນາຍົກລັດຖະມົນຕີ; ກອງປະຊຸມໄດ້ສືບຕໍ່ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ຈາກທ່ານ ເພັດ ພົມພິພັກ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024 ຈາກທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ, ການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີແລະແຜນການ 6 ເດືອນທ້າຍປີ 2024 ຈາກທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ. ຫຼັງຈາກນັ້ນ, ປະທານກອງປະຊຸມ ໄດ້ມີຄຳເຫັນເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນ; ບັນດາທ່ານ ສສຊ ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບົດລາຍງານຂອງລັດຖະບານ ເຊິ່ງຈະໄດ້ສືບຕໍ່ປະກອບຄຳເຫັນໃສ່ບັນດາບົດລາຍງານຂ້າງເທິງຈົນຮອດວັນທີ 11 ມິຖຸນາ 2024.

ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຈະດຳເນີນໄປຈົນຮອດວັນທີ 02 ກໍລະກົດ 2024; ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນທີ່ຈະສົ່ງໄປຍັງກອງປະຊຸມ, ເຊິ່ງສາມາດສົ່ງໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 ໂດຍບໍ່ເສຍຄ່າ (ເປີດໃນໂມງລັດຖະການ).
- ອີເມວ: nalao.156@gmail.com.
- App: Lao Na.

**(ນາງ: ສຸພາວັນ ທອມສະນິດ)**

# ຮຽນພາສາເພື່ອພັດທະນາ ດ້ານວິຊາການ ແລະ ທັກສະ ໃນອາຊີບ

❖ ວິເສດ ສະແຫວງສຶກສາ

ດັ່ງທີ່ຮູ້ກັນແລ້ວວ່າ ຍີ່ປຸ່ນໄດ້ກະກຽມຮອບດ້ານເພື່ອເປັນເຈົ້າພາບງານມະຫະກຳກິລາໂອລິມປິກ ທີ່ໂຕກຽວ ໃນປີ 2020 ແຕ່ຍ້ອນການລະບາດຂອງພະຍາດໂຄວິດ-19 ຈຶ່ງໄດ້ເລື່ອນມາຈັດໃນປີ 2021. ໃນການກະກຽມໃຫ້ແກ່ເຫດການສຳຄັນລະດັບໂລກນັ້ນ ທາງການຍີ່ປຸ່ນໄດ້ຂຶ້ນແຜນພັດທະນາທັກສະຂອງເຈົ້າໜ້າທີ່ຕຳຫຼວດ ເພື່ອໃຫ້ບໍລິການທີ່ດີແກ່ເຫຼົ່ານັກກິລາ ແລະ ແຂກຄົນຕາມວິຊາສະເພາະຂອງພວກຕົນ; ໃນນັ້ນ, ໄດ້ເນັ້ນທັກສະດ້ານພາສາອັງກິດທີ່ຄົນທົ່ວໂລກນຳໃຊ້ຢ່າງແຜ່ຫຼາຍ ທັກສະດ້ານພາສານີ້, ທາງການຍີ່ປຸ່ນເນັ້ນໃຫ້ເຈົ້າໜ້າທີ່ຕຳຫຼວດຮຽນສະເພາະກ່ຽວກັບພາສາອັງກິດທີ່ນຳໃຊ້ພົວພັນໃນເຫດການສຸກເສີນ ເຊັ່ນ: ກໍລະນີແຂກຕ່າງປະເທດປະສົບອຸບັດເຫດ ເຮັດສິ່ງຂອງຕົກເຮ່ຍ ຫຼື ເມື່ອພວກເຂົາປະເຊີນກັບເຫດການໃຊ້ຄວາມຮຸນແຮງ, ການກໍ່ການຮ້າຍ ແລະ ອື່ນໆທີ່ເປັນອັນຕະລາຍຕໍ່ຊີວິດ. ສ່ວນຢູ່ປະເທດມາເລເຊຍນັ້ນ ກໍມີຂ່າວ (ຕາມຂ່າວ Vientiane Times 3 ກຸມພາ ) ທີ່ບອກວ່າ: ທ່ານ ດຣ. ມາຮາເທຍ ໂມຮຳມັດ ທີ່ຍັງເປັນນາຍົກລັດຖະມົນຕີໃນເວລານັ້ນ ໄດ້ປະກາດໃຫ້ນຳໃຊ້ພາສາອັງກິດ ໃນການສອນ ແລະ ຮຽນວິຊາຄະນິດສາດ ແລະ ວິຊາວິທະຍາສາດໃນໂຮງຮຽນທົ່ວປະເທດ ແຕ່ຂ່າວບໍ່ໄດ້ບອກກ່ຽວກັບເຫດຜົນ. ຖ້າໃຫ້ຄາດຄະເນກ່ຽວກັບເຫດຜົນ ກໍອາດເປັນຍ້ອນວ່າພາສາອັງກິດຕິດພັນກັບຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກໂນໂລຊີ ແລະ ນະວັດຕະກຳໃນຍຸກດິຈິຕອນນັ້ນເອງ, ທັງເປັນພາສາທີ່ຊ່ວຍໃຫ້ສາມາດເຂົ້າເຖິງຄວາມຮູ້ຈາກປຶ້ມຕຳລາວິຊາຄະນິດສາດ ແລະ ວິທະຍາສາດຢ່າງກວ້າງຂວາງ. ພໍມີປະກາດນີ້ອອກມາຈາກທ່ານນາຍົກ ມາຮາເທຍ ໂມຮຳມັດ, ທ່ານລັດຖະມົນຕີກະຊວງສຶກສາທິການ ກໍຂານຮັບວ່າຈະຕ້ອງມີການປັບປຸງລະບົບການສອນວິຊາພາສາອັງກິດ ໃນວິຊາວິທະຍາສາດ ແລະ ຄະນິດສາດ ໃຫ້ມີປະສິດທິພາບທີ່ສຸດ. ໃນປັດຈຸບັນ, ການຮຽນພາສາຕ່າງປະເທດນັ້ນ ມີລັກສະນະສະເພາະດ້ານຫຼາຍຂຶ້ນ ຄືບໍ່ແມ່ນຮຽນຊະໄປແບບລີມໆແລ້ງໆຕາມມີຕາມເກີດ ຫຼື ຮຽນໄປຕາມກະແສນິຍົມຊື່ໆ.

ສຳລັບຢູ່ປະເທດລາວພວກເຮົາການຮຽນພາສາຕ່າງປະເທດນັ້ນໄດ້ເລີ່ມຕິດພັນກັບອາຊີບການງານ, ພາສາປະເທດໃດທີ່ຈະຊ່ວຍໃຫ້ເຂົ້າເຖິງວຽກເຮັດງານທຳໄດ້ ກໍຮຽນພາສານັ້ນເປັນຕົ້ນຕໍ, ສ່ວນພາສາອື່ນເປັນສຳຮອງ. ການລົງທຶນຂອງປະເທດໃດຮັບປະກັນວຽກເຮັດງານທຳແບບຖາວອນ ແລະ ກວ້າງຂວາງ ກໍຄວນຮຽນພາສາຂອງປະເທດນັ້ນ ເຊັ່ນ: ຈີນ, ຍີ່ປຸ່ນ, ເກົາຫຼີ, ຫວຽດນາມ... ບໍ່ແມ່ນແຕ່ຈະແລ່ນນຳແຕ່ພາສາອັງກິດພາສາດຽວອ້ອຍຕ້ອຍ. ສ່ວນຢູ່ປະເທດອູແກຼນ (ຢູເຄຼນ) ກໍມີຂ່າວວ່າໃນວັນທີ 25 ເມສາ 2019 ສະພາຂອງປະເທດນີ້ ໄດ້ຮັບຮອງເອົາກົດໝາຍບັງຄັບໃຫ້ໃຊ້ພາສາແຫ່ງຊາດ (ອູແກຼນ) ເປັນພາສາທາງການຢ່າງເຄັ່ງຄັດ, ຄືໃຫ້ທຸກຄົນຮູ້ປາກ-ຂຽນພາສານີ້ໄດ້ ພິເສດແມ່ນທະຫານ, ທ່ານໝໍ ແລະ ຄູ-ອາຈານ, ທັງໄດ້ກຳນົດໃຫ້ຜະລິດຕະພັນຮູບເງົາ, ລາຍການໂທລະພາບພາຍໃນອັດຕາ 90% ເປັນພາສາອູແກຼນ ແລະ 50% ເປັນຢ່າງໜ້ອຍສຳລັບຜະລິດຕະພັນສິ່ງພິມ (ປຶ້ມ-ວາລະສານ). ຄົນອູແກຼນ ທີ່ສາມາດປາກ-ຂຽນພາສາຂອງຕົນ ແລະ ພາສາຣັດເຊຍຄວບຄູ່ກັນຢ່າງລ່ຽນໄຫຼນັ້ນ ມີປະມານ 25% (ສຳຫຼວດປີ 2019).

TE SOLE




## ບໍ່ງຶດດອກ!

*#ບ່າວກະບື*

ນັກສະແດງເວທີຄົນໜຶ່ງ ເວົ້າໂອ້ອວດກ່ຽວກັບຄວາມເກັ່ງກ້າສາມາດຂອງຕົນກັບເພື່ອນຂອງເຂົາວ່າ "ເມື່ອຄືນກ່ອນ ເຮົາສະແດງສາກເປັນຄົນຕາຍ, ຜູ້ຊົມຈຳນວນຫຼວງຫຼາຍພາກັນຮ້ອງໄຫ້ ". ເພື່ອນເຂົາໂຕ້ຕອບຄືນວ່າ: "ສ່ຳນັ້ນບໍ່ງຶດດອກ, ເທື່ອແລ້ວນີ້ ເຮົາສວມສາກເປັນຄົນຕາຍ ຈົນບໍລິສັດປະກັນໄພຈ່າຍເງິນຄ່າທົດແທນໃຫ້ເມຍເຮົາໜຶ່ງລ້ານໂດລາພຸ້ນ!"

## What Of That

***#BAOKBU***

A stage actor boasting about his prowess, said to his friend: " The other evening I did the dying act so well, many in the audience broke down and cried: " What of that ! " retorted his friend. " The last time I did a death scene, the insurance company paid my wife one million dollars in compensation ! "




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

## ແຈ້ງການ

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມ, ເຊິ່ງສາມາດສົ່ງໄດ້ຕາມວິທີລຸ່ມນີ້:

- ສາຍດ່ວນ: 156 (ໃນໂມງລັດຖະການ)
- ອີເມວ: nalao.156@gmail.com
- App: Laona

# ປະມວນພາບບັນຍາກາດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX



**ຜູ້ຊີ້ນຳ**

ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**

ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**

ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ